	ວັນທີຮ່າງນະໂຍບາຍ 07/28/2015 ວັນທີມີຜົນນຳໃຊ້: ວັນທີທີ່ຖືກຮັບຮອງຄັ້ງສຸດທ້າຍ: ວັນທີທີ່ໄດ້ທົບທວນ: 12/31/2015 ວັນທີທີ່ຈະທົບທວນຄັ້ງຕໍ່ໄປ: 1/1/2019
	ເຈົ້າຂອງ: ເຈຟ໌ ສປຣາກ (Jeff Sprague), ຫົວໜ້າ ຫ້ອງການເງິນ
	ຂົງເຂດນະໂຍບາຍ: ການເງິນ
ນະໂຍບາຍການເງິນ: ນະໂຍບາຍການທົດແທນ	ບ່ອນອີງ:

ນະໂຍບາຍກ່ຽວກັບການຊ່ວຍເຫລືອດ້ານການເງິນ (ການເບິ່ງແຍງຈາກມູນນິທິ)

ຈຸດປະສົງ

ຈຸດປະສົງຂອງນະໂຍບາຍແມ່ນເພື່ອໃຫ້ຂໍ້ມູນແກ່ຄົນເຈັບກ່ຽວກັບການຊ່ວຍເຫລືອດ້ານການເງິນ (ການເບິ່ງແຍງຈາກມູນນິທິ) ມີບໍລິການໃຫ້ຢູ່ໃນບັນດາໂຮງໝໍຂອງ Sutter Health ແລະ ຮ່າງຂະບວນການສຳລັບການກຳນົດສິດສຳລັບການຊ່ວຍເຫລືອດ້ານການເງິນ.

ນະໂຍບາຍ

ແມ່ນນະໂຍບາຍຂອງ Sutter Health ເພື່ອຈັດຫາຂໍ້ມູນທີ່ຂຽນຂຶ້ນເປັນລາຍລັກອັກສອນໂດຍສາມາດເຂົ້າໃຈໄດ້ ກ່ຽວກັບການຊ່ວຍເຫລືອດ້ານການເງິນ ເພື່ອຈັດຫາການຊ່ວຍເຫລືອດ້ານການເງິນທີ່ອີງໃສ່ລາຍໄດ້ (ການເບິ່ງແຍງຈາກມູນນິທິ) ໃຫ້ແກ່ຄົນເຈັບທີ່ມີຄຸນສົມບັດເໝາະສົມ.

ຂອບເຂດ

ນະໂຍບາຍນີ້ ໃຊ້ໄດ້ກັບບັນດາສິ່ງອຳນວຍຄວາມສະດວກທຸກຢ່າງຂອງໂຮງໝໍທີ່ມີໃບຢັ້ງຢືນ ຊຶ່ງດຳເນີນການໂດຍ Sutter Health ຫຼື ນິຕິບຸກຄົນທີ່ເປັນບໍລິສັດໃນເຄືອຂ່າຍ (Affiliated Entity) (ດັ່ງທີ່ໄດ້ຖືກກຳນົດຢູ່ໃນບັນດາກົດໝາຍຂອງ Sutter Health), ແລະ ໃນໂຮງໝໍອື່ນໆທຸກແຫ່ງທີ່ Sutter Health ແລະ/ຫຼື ນິຕິບຸກຄົນທີ່ເປັນບໍລິສັດໃນເຄືອຂ່າຍ ມີການຄວບຄຸມ ການລົງຄະແນນສຽງໂດຍກົງ ຫຼື ທາງອ້ອມ ຫຼື ຜົນປະໂຫຍດຂອງຄວາມຖືກຕ້ອງຫຼາຍກ່ວາ 50% (ໃນນີ້ເອີ້ນວ່າ “ໂຮງໝໍ” ຫຼື “ບັນດາໂຮງໝໍຂອງ Sutter Health”(ເບິ່ງລາຍຊື່ຢູ່ໃນ ເອກະສານຄັດຕິດ G). ຖ້າຫາກບໍ່ມີການລະບຸໄວ້ສະເພາະ, ນະໂຍ

ບາຍນີ້ບໍ່ສາມາດໃຊ້ໄດ້ກັບແພດ ຫຼື ຜູ້ໃຫ້ບໍລິການດູແລສຸຂະພາບຕ່າງໆ ລວມທັງ ແພດປະຈຳຫ້ອງສຸກເສີນ, ແພດວາງຢາສະຫລົບ ຫຼື ຢາມຶນ, ແພດຮັງສີ, ແພດປະຈຳໂຮງໝໍ, ແພດທີ່ບ່ຽງມະຕິພະຍາດ, ແລະ ອື່ນໆ ຊຶ່ງເປັນຜູ້ທີ່ການບໍລິການໄດ້ບໍ່ລວມຢູ່ໃນໃບບິນຂອງໂຮງໝໍ. ນະໂຍບາຍນີ້ບໍ່ສ້າງພັນທະໃຫ້ແກ່ໂຮງໝໍໃນການຈ່າຍເງິນໃຫ້ແພດດັ່ງກ່າວນັ້ນ ຫຼື ການບໍລິການຂອງຜູ້ສະໜອງດ້ານການແພດອື່ນໆ. ໃນຣັຖແຄລິຟໍເນັຍ, ແພດສຸກເສີນທີ່ໃຫ້ບໍລິການສຸກເສີນໃນໂຮງໝໍ ຈຳເປັນຕໍ່ການໃຫ້ສ່ວນຫລຸດແກ່ຄົນເຈັບທີ່ບໍ່ມີປະກັນໄພ ຫຼື ຄົນເຈັບທີ່ມີມູນຄ່າໃນການປິ່ນປົວສູງ ຊຶ່ງເປັນຜູ້ທີ່ຢູ່ ຫຼື ຕ່ຳກ່ວາລະດັບຄວາມທຸກຍາກຂອງຣັຖບານກາງ 350 ເປີເຊັນ.

ຂໍ້ກຳນົດ

<u>ການບໍລິການທີ່ຊັບຊ້ອນ/ແບບພິເສດ</u>: "ການບໍລິການທີ່ຊັບຊ້ອນ/ແບບພິເສດ" ແມ່ນການບໍລິການທີ່ Sutter Health ຫຼື ໂຮງໝໍ ກຳນົດຄວາມຊັບຊ້ອນ ແລະ ແບບພິເສດ (ຕົວຢ່າງ: ການປູກຖ່າຍ, ການບໍລິການກ່ຽວກັບການທົດລອງ ແລະ ການສຶບສວນ) ພ້ອມດ້ວຍການບໍລິການຄັດເລືອກບາງຢ່າງ ໂດຍສະເພາະແລ້ວ ຢູ່ນອກເໜືອຈາກການຄຸ້ມຄອງພາຍໃຕ້ສັນຍາຄຸ້ມຄອງແຜນສຸຂະພາບ (ຕົວຢ່າງ: ຂະບວນການເພື່ອຄວາມສວຍງາມ).

<u>ລະດັບຄວາມທຸກຍາກຂອງຣັຖບານກາງ (FPL)</u>:"ລະດັບຄວາມທຸກຍາກຂອງຣັຖບານກາງ" ຂອງ "FPL" ແມ່ນມາດຕະການຂອງລະດັບຂອງລາຍໄດ້ທີ່ພິມຈຳໜ່າຍແຕ່ລະປີໂດຍພະແນກບໍລິການສຸຂະພາບ ແລະ ມະນຸດຂອງສະຫະຣັຖ (United States Department of Health and Human Services - HHS) ແລະ ຖືກນຳໃຊ້ໂດຍບັນດາໂຮງໝໍ ເພື່ອກຳນົດສິດທິສຳລັບການຊ່ວຍເຫລືອດ້ານການເງິນ.

<u>ການຊ່ວຍເຫລືອດ້ານການເງິນ</u>*:* "ການຊ່ວຍເຫລືອດ້ານການເງິນ" ໝາຍຄວາມວ່າເປັນການເບິ່ງແຍງຈາກມູນນິທິຢ່າງເຕັມສ່ວນ ແລະ ການເບິ່ງແຍງຈາກມູນນິທິທີ່ມີມູນຄ່າດູແລສຸຂະພາບສູງ (Full Charity Care and High Medical Cost Charity Care) (ຊຶ່ງໄດ້ຮ່າງໄວ້ໃນພາກ A.1 ສິດທິ).

<u>ການບໍລິການຂອງໂຮງໝໍ</u>:"ການບໍລິການຂອງໂຮງໝໍ"ແມ່ນທຸກບໍລິການທີ່ໂຮງໝໍໄດ້ອອກໃບຢັ້ງຢືນໃຫ້, ລວມທັງ ການບໍລິການສຸກເສີນ ແລະ ການດູແລສຸຂະພາບທີ່ຈຳເປັນອື່ນໆ(ນອກເໜືອຈາກການບໍລິການທີ່ຊັບຊ້ອນ/ແບບພິເສດ).

<u>ພາສາຫລັກຂອງພື້ນທີ່ບໍລິການຂອງໂຮງໝໍ</u>:"ພາສາຫລັກຂອງພື້ນທີ່ບໍລິການຂອງໂຮງໝໍ" ແມ່ນພາສາທີ່ໃຊ້ໜ້ອຍກ່ວາ 1,000 ຄົນ ຫຼື 5% ຂອງຊຸມຊົນທີ່ໃຫ້ບໍລິການໂດຍໂຮງໝໍ ໂດຍອີງໃສ່ການປະເມີນຜົນຄວາມຕ້ອງການສຸຂະພາບຂອງຊຸມຊົນລ້າສຸດທີ່ປະຕິບັດໂດຍໂຮງໝໍ.

<u>ຄົນເຈັບທີ່ບໍ່ມີປະກັນໄພ</u>: "ຄົນເຈັບທີ່ບໍ່ມີປະກັນໄພ" ແມ່ນຄົນເຈັບທີ່ບໍ່ມີບຸກຄົນທີສາມຈ່າຍເງິນໃຫ້ ໃນສ່ວນໃດສ່ວນໜຶ່ງຂອງລາຍຈ່າຍດູແລສຸຂະພາບຂອງພວກເຂົາ, ລວມທັງ ປະກັນໄພທາງດ້ານການຄ້າ ຫຼື ອື່ນໆ, ໂປຣແກຣມຊ່ວຍເຫລືອທາງດ້ານການດູແລສຸຂະພາບທີ່ມີຜູ້ອຸປະຖຳ, ຫຼື ໜີ້ສິນຂອງບຸກຄົນທີສາມ, ລວມທັງ ຄົນເຈັບທີ່ໃຊ້ຈ່າຍເງິນຊ່ວຍເຫລືອເກືອບໝົດກ່ອນຈະເຂົ້າພັກໂຮງໝໍ ໂດຍບໍ່ມີຂອບເຂດຈຳກັດ.

<u>ຄົນເຈັບທີ່ມີປະກັນໄພ</u>: "ຄົນເຈັບທີ່ມີປະກັນໄພ" ແມ່ນຄົນເຈັບທີ່ມີບຸກຄົນທີສາມຈ່າຍເງິນໃຫ້ສຳລັບສ່ວນໃດໜຶ່ງຂອງລາຍຈ່າຍດູແລສຸຂະພາບຂອງພວກເຂົາ, ແຕ່ວ່າ ບໍ່ລວມຄົນເຈັບທີ່ໄດ້ຮັບການຄຸ້ມຄອງຈາກ Medi-Cal.

<u>ຄວາມຮັບຜິດຊອບຂອງຄົນເຈັບ</u>: “ຄວາມຮັບຜິດຊອບຂອງຄົນເຈັບ” ແມ່ນຈຳນວນເງິນທີ່ຄົນເຈັບທີ່ມີປະກັນໄພ ຮັບຜິດຊອບຕໍ່ການຈ່າຍເງິນສ່ວນເກີນ ຫຼັງຈາກທີ່ມູນຄ່າໃນການຄຸ້ມຄອງຂອງບຸກຄົນທີສາມຂອງຄົນເຈັບໄດ້ກຳນົດຈຳນວນເງິນຊ່ວຍເຫຼືອໃຫ້ຄົນເຈັບ.

ຂະບວນການ

A. ການໄດ້ຮັບສິດ

1. <u>ປະເພດຂອງການໄດ້ຮັບສິດ</u>: ໃນຂະບວນການສະໜັກທີ່ລະບຸໄວ້ໃນຂໍ້ B ແລະ C ລຸ່ມນີ້, ໂຮງໝໍຈະສະໜັກຂໍເກນທີ່ໄດ້ຮັບສິດດັ່ງຕໍ່ໄປນີ້ ສຳລັບການຊ່ວຍເຫລືອດ້ານການເງິນ:

ປະເພດຂອງການຊ່ວຍເຫລືອດ້ານການເງິນ	**ເກນຂອງການໄດ້ຮັບສິດຂອງຄົນເຈັບ**	**ສ່ວນຫລຸດລາຄາທີ່ມີ**
ເບິ່ງແຍງຈາກມູນນິທິແບບເຕັມສ່ວນ	ຄົນເຈັບແມ່ນຄົນເຈັບທີ່ບໍ່ມີປະກັນໄພທີ່ມີລາຍໄດ້ຂອງຄອບຄົວ (ດັ່ງທີ່ໄດ້ລະບຸໄວ້ລຸ່ມນີ້) ຢູ່ ຫຼື ຕ່ຳກ່ວາ 400% ຂອງ FPL ລ້າສຸດ.	ຊຳລະລາຍຈ່າຍຄ່າບໍລິການຂອງໂຮງໝໍທັງໝົດ
ການເບິ່ງແຍງຈາກມູນນິທິ ທີ່ມີມູນຄ່າດູແລສຸຂະພາບສູງ (ສຳລັບຄົນເຈັບທີ່ມີປະກັນໄພ)	1. ຄົນເຈັບແມ່ນຄົນເຈັບທີ່ມີປະກັນໄພ ໂດຍມີລາຍໄດ້ຂອງຄອບຄົວ (ດັ່ງທີ່ໄດ້ລະບຸໄວ້ລຸ່ມນີ້) ຢູ່ທີ່ ຫຼື ຕ່ຳກ່ວາ 400% ຂອງ FPL ລ້າສຸດ; **<u>ແລະ</u>** 2. ລາຍຈ່າຍດູແລສຸຂະພາບສຳລັບພວກເຂົາ ຫຼື ຄອບຄົວຂອງພວກເຂົາ (ທີ່ມີຢູ່ໃນໂຮງໝໍ ຫຼື ໄດ້ຈ່າຍໃຫ້ຜູ້ສະໜອງອື່ນໆພາຍໃນ 12 ເດືອນທີ່ຜ່ານມາ) ເກີນ 10% ຂອງລາຍໄດ້ຂອງຄອບຄົວຂອງຄົນເຈັບ.	ຊຳລະຈຳນວນເງິນທີ່ຮັບຜິດຊອບຂອງຄົນເຈັບຂຶ້ນສຳລັບບໍລິການຂອງໂຮງໝໍ

2. ຄິດໄລ່ລາຍໄດ້ຂອງຄອບຄົວ: ກຳນົດສິດທິຂອງຄົນເຈັບສຳລັບການຊ່ວຍເຫລືອດ້ານການເງິນ, ກ່ອນອື່ນໝົດ ໂຮງໝໍຈະຄິດໄລ່ລາຍໄດ້ຂອງຄອບຄົວຂອງຄົນເຈັບ, ດັ່ງຕໍ່ໄປນີ້:

   a) ຄອບຄົວຂອງຄົນເຈັບ: ຄອບຄົວຂອງຄົນເຈັບຈະຖືກກຳນົດດັ່ງຕໍ່ໄປນີ້:

      (i) ຄົນເຈັບທີ່ເປັນຜູ້ໃຫຍ່: ສຳລັບຄົນເຈັບທີ່ມີອາຍຸຫລາຍກ່ວາ 18 ປີ, ຄອບຄົວຂອງຄົນເຈັບ ລວມມີ: ຄູ່ສົມຣົດຂອງພວກເຂົາ, ຄູ່ຜົວເມຍທີ່ຢູ່ບ້ານດຽວກັນ, ແລະ ລູກຫລານທີ່ຢູ່ພາຍໃຕ້ຄວາມດູແລ ທີ່ມີອາຍຸໜ້ອຍກ່ວາ 21 ປີ, ບໍ່ວ່າຈະຢູ່ໃນບ້ານ ຫຼື ບໍ່ຢູ່.

      (ii) ພໍ່ແມ່ທີ່ເປັນຄົນໜຸ່ມນ້ອຍ: ສຳລັບພໍ່ແມ່ທີ່ມີອາຍຸຕ່ຳກ່ວາ 18 ປີ, ຄອບຄົວຂອງຄົນເຈັບ ລວມທັງ ພໍ່ແມ່ຂອງພວກເຂົາ, ຍາດພີ່ນ້ອງທີ່ດູແລ ແລະ ລູກຫລານຄົນອື່ນທີ່ມີພໍ່ແມ່ ຫຼື ຍາດພີ່ນ້ອງທີ່ດູແລ ອາຍຸໜ້ອຍກ່ວາ 21 ປີ.

   b) ຫລັກຖານພິສູດລາຍໄດ້ຂອງຄອບຄົວ: ຄົນເຈັບຈະຖືກຮຽກຮ້ອງໃຫ້ຕອບສະໜອງຫົວຂໍ້ວ່ນໃບຮັບເງິນລ້າສຸດ ຫຼື ໃບສົ່ງອາກອນເທົ່ານັ້ນ ເພື່ອເປັນຫລັກຖານພິສູດລາຍໄດ້. ລາຍໄດ້ຂອງຄອບຄົວແມ່ນການຫາເງິນປະຈຳປີຂອງທຸກຄົນໃນຄອບຄົວຄົນເຈັບນັບຈາກກ່ອນ 12 ເດືອນ ຫຼື ກ່ອນປີເສຍອາກອນ ດັ່ງທີ່ສະແດງໃຫ້ເຫັນຢູ່ໃນຫົວຂໍ້ວ່ນຈ່າຍເງິນລ້າສຸດ ຫຼື ໃບສົ່ງອາກອນລາຍໄດ້, ໜ້ອຍກ່ວາລາຍຈ່າຍສຳລັບຄ່າລ້ຽງດູ ແລະ ການອຸດໜູນເດັກ. ລາຍໄດ້ທີ່ລວມຢູ່ໃນການຄິດໄລ່ນີ້ແມ່ນທຸກໆແບບຟອມຂອງລາຍໄດ້, ຕົວຢ່າງ: ລາຍໄດ້ຈາກເງິນເດືອນ ແລະ ເງິນຄ່າແຮງງານ, ເງິນບຳນານ, ເງິນເບ້ຍລ້ຽງທີ່ຣັຖບານໂອນໃຫ້, ເຊັ່ນ: ສະແຕັມອາຫານ ແລະ ລາຍໄດ້ຈາກການລົງທຶນ. ລາຍໄດ້ປະຈຳປີອາດຈະຖືກກຳນົດໂດຍລາຍໄດ້ຂອງຄອບຄົວໃນປີປັດຈຸບັນຂອງແຕ່ລະປີ. Sutter ອາດຈະພິສູດລາຍໄດ້ ໂດຍໃຊ້ຜູ້ຈັດຫາບໍລິການທີ່ສາມາດໄດ້ຮັບສິດ ທີ່ມາຈາກຂ້າງນອກ ໂດຍມີເງື່ອນໄຂທີ່ວ່າ: ການບໍລິການດັ່ງກ່າວ ພຽງແຕ່ກຳນົດສິດໃນການນຳໃຊ້ຂໍ້ມູນທີ່ອະນຸຍາດຈາກນະໂຍບາຍນີ້ເທົ່ານັ້ນ.

   c) ຄິດໄລ່ລາຍໄດ້ຂອງຄອບຄົວສຳລັບຄົນເຈັບທີ່ໝົດເຂດໄດ້ຮັບສິດແລ້ວ: ຄົນເຈັບທີ່ໝົດເຂດໄດ້ຮັບສິດ ທີ່ບໍ່ມີຄູ່ສົມຣົດທີ່ຍັງມີຊີວິດຢູ່ ອາດຈະເຫັນວ່າບໍ່ມີລາຍໄດ້ສຳລັບຈຸດປະສົງຂອງການຄິດໄລ່ລາຍໄດ້ຂອງຄອບຄົວ. ເອກະສານລາຍໄດ້ແມ່ນບໍ່ມີຄວາມຈຳເປັນສຳລັບຄົນເຈັບທີ່ໝົດອາຍຸແລ້ວ; ເຖິງຢ່າງໃດກໍ່ຕາມ, ອາດຈະຕ້ອງການເອກະສານກ່ຽວກັບຊັບສິນທີ່ເປັນມໍລະດົກ. ຄູ່ສົມຣົດທີ່ຍັງມີຊີວິດຢູ່ຂອງຄົນເຈັບທີ່ຄົນເຈັບໝົດເຂດໄດ້ຮັບສິດ ອາດຈະໃຊ້ສຳລັບການຊ່ວຍເຫລືອດ້ານການເງິນ.

3. ຄິດໄລ່ລາຍໄດ້ຂອງຄອບຄົວເປັນເປີເຊັນຂອງ FPL: ຫລັງຈາກກຳນົດລາຍໄດ້ຂອງຄອບຄົວ, ໂຮງໝໍຈະຄິດໄລ່ລະດັບຂອງລາຍໄດ້ຂອງຄອບຄົວໂດຍປຽບທຽບກັບ FPL ໂດຍສະແດງເປັນເປີເຊັນຂອງ FPL. ຕົວຢ່າງ: ຖ້າລະດັບຄວາມທຸກຍາກຂອງຣັຖບານກາງສຳລັບຄອບຄົວທີ່ມີສາມຄົນແມ່ນ $20,000 ແລະ

ລາຍໄດ້ຂອງຄອບຄົວຂອງຄົນເຈັບແມ່ນ $60,000, ໂຮງໝໍຈະຄິດໄລ່ລາຍໄດ້ຂອງຄອບຄົວຂອງຄົນເຈັບ ເປັນ 300% ຂອງ FPL. ໂຮງໝໍຈະໃຊ້ການຄິດໄລ່ນີ້ໃນຂະບວນການສະໝັກ ເພື່ອກຳນົດວ່າຄົນເຈັບເຮັດ ໄດ້ຕາມເກນຂອງລາຍໄດ້ສຳລັບການຊ່ວຍເຫລືອດ້ານການເງິນຫລືບໍ່.

4. <u>ສະພາບການພິເສດ – ເງິນຊ່ວຍເຫລືອທີ່ໄດ້ໃຊ້ໝົດໄປແລ້ວໃນຊ່ວງການພັກຂອງຄົນເຈັບ</u>: ເມື່ອການຄຸ້ມ ຄອງຄົນເຈັບທີ່ມີປະກັນໄພຈາກບຸກຄົນທີສາມ ໃນການຈ່າຍພຽງແຕ່ສ່ວນໃດສ່ວນໜຶ່ງຂອງເງິນທີ່ຊຳລະຄືນ ຕາມທີ່ໄດ້ຄາດໄວ້ສຳລັບການພັກຂອງຄົນເຈັບ ຍ້ອນວ່າຄົນເຈັບຈ່າຍເງິນທີ່ໄດ້ຮັບຜົນປະໂຫຍດນັ້ນໝົດໄປ ແລ້ວໃນເວລາທີ່ພວກເຂົາພັກ, ໂຮງໝໍຄວນຈະເກັບເງິນຈາກຄົນເຈັບໃນຍອດຄ້ງເຫລືອຂອງການຊຳລະຄືນ ທີ່ຄາດໄວ້ ທີ່ຈະເປັນໜີ້ຈາກການຄຸ້ມຄອງຂອງບຸກຄົນທີສາມ ຖ້າວ່າເງິນທີ່ໄດ້ຮັບຜົນປະໂຫຍດນັ້ນບໍ່ທັນໃຊ້ ໝົດ. ໂຮງໝໍຈະບໍ່ທວງເງິນຈາກຄົນເຈັບ ກ່ຽວກັບເງິນສ່ວນເກີນທີ່ຈະເປັນໜີ້ຈາກການຄຸ້ມຄອງຂອງບຸກຄົນ ທີສາມ ຖ້າວ່າຜົນປະໂຫຍດບໍ່ໃຊ້ໝົດກ້ຽງ ບວກໃຫ້ມູນຄ່າທີ່ຊ່ວຍຈ່າຍຂອງຄົນເຈັບ ຫຼື ມີການປະກັນ ໄພແບບແບ່ງຈ່າຍ. ຄົນເຈັບທີ່ໃຊ້ເງິນເກີນເງິນຜົນປະໂຫຍດທີ່ພວກເຂົາໄດ້ຮັບໃນຊ່ວງທີ່ພັກຢູ່ໃນໂຮງໝໍ ສາມາດມີສິດສະໝັກຂໍການຊ່ວຍເຫລືອດ້ານການເງິນ. ຖ້າວ່າຄົນເຈັບມີສິດໄດ້ຮັບການຊ່ວຍເຫລືອດ້ານ ການເງິນ, ໂຮງໝໍຈະຂຽນຈຳນວນເງິນທັງໝົດທີ່ເກັບຄ່າບໍລິການທີ່ໂຮງໝໍຈັດຫາໃຫ້ຫລັງຈາກທີ່ຄົນເຈັບໃຊ້ ຈ່າຍເກີນສ່ວນທີ່ໄດ້ຮັບຜົນປະໂຫຍດ.

5. <u>ການຍົກເວັ້ນ/ການບໍ່ມີຄຸນສົມບັດໄດ້ຮັບການຊ່ວຍເຫລືອດ້ານການເງິນ</u>: ສະພາບທີ່ຈະບໍ່ໄດ້ຮັບການຊ່ວຍ ເຫລືອດ້ານການເງິນພາຍໃຕ້ນະໂຍບາຍນີ້ ແມ່ນມີດັ່ງຕໍ່ໄປນີ້:

    a) <u>ຄົນເຈັບທີ່ບໍ່ມີປະກັນໄພ ຮຽກຮ້ອງການບໍລິການທີ່ມີລັກສະນະຊັບຊ້ອນ/ແບບພິເສດ</u>: ໂດຍທົ່ວ ໄປ, ຄົນເຈັບທີ່ບໍ່ມີປະກັນໄພ ທີ່ຮຽກຮ້ອງບໍລິການທີ່ມີລັກສະນະຊັບຊ້ອນ/ແບບພິເສດ (ຕົວ ຢ່າງ: ການປູກຖ່າຍ, ຂະບວນການທີ່ມີການທົດລອງ ຫລື ສຶບສວນ), ແລະ ຮ້ອງຂໍການ ຊ່ວຍເຫລືອດ້ານການເງິນສຳລັບການບໍລິການດັ່ງກ່າວ ຕ້ອງໄດ້ຮັບການຮັບຮອງທາງດ້ານ ການບໍລິຫານຈາກຜູ້ຮັບຜິດຊອບທາງດ້ານການເງິນຢູ່ໃນໂຮງໝໍ (ຫຼື ຜູ້ທີ່ໄດ້ຮັບມອບໝາຍ) ກ່ອນຈະມີການສະໜອງການບໍລິການດັ່ງກ່າວ ເພື່ອໃຫ້ໄດ້ຮັບສິດການຊ່ວຍເຫລືອດ້ານການ ເງິນ. ໂຮງໝໍຈະສ້າງຂະບວນການສຳລັບຄົນເຈັບ ເພື່ອໃຫ້ສາມາດຮຽກຮ້ອງເອົາການຮັບຮອງ ທາງດ້ານການບໍລິການກ່ອນ ເນັ້ນໜັກສະເພາະການບໍລິການທີ່ຕ້ອງການໃຫ້ມີການຮັບຮອງ ດັ່ງກ່າວ. ການບໍລິການແບບສະໝັກໃຈທີ່ຕາມປົກກະຕິແລ້ວນັ້ນແມ່ນຖືກຍົກເວັ້ນຈາກການຄຸ້ມ ຄອງພາຍໃຕ້ສັນຍາການຄຸ້ມຄອງແຜນສຸຂະພາບ (ຕົວຢ່າງ: ຂະບວນການເພື່ອຄວາມສວຍ ງາມ) ຈະບໍ່ມີສິດໄດ້ຮັບການຊ່ວຍເຫລືອດ້ານການເງິນ.

    b) <u>ຄົນເຈັບທີ່ມີການແບ່ງຈ່າຍຈາກ Medi-Cal</u>: ຄົນເຈັບທີ່ໄດ້ຮັບການຊ່ວຍເຫລືອຈາກ Medi-Cal ຜູ້ທີ່ມີສ່ວນຮ່ວມໃນການຈ່າຍເງິນ ຈະບໍ່ມີສິດສະໝັກຂໍການຊ່ວຍເຫລືອດ້ານການເງິນ ເພື່ອຫລຸດຜ່ອນຈຳນວນເງິນທີ່ແບ່ງຈ່າຍ. ໂຮງໝໍຈະເກັບເງິນເຫລົ່ານີ້ຈາກຄົນເຈັບ.

    c) <u>ຄົນເຈັບປະຕິເສດການບໍລິການທີ່ຖືກຄຸ້ມຄອງ</u>: ຄົນເຈັບໃດໜຶ່ງທີ່ມີປະກັນໄພ ຜູ້ທີ່ເລືອກທີ່ຈະ ເອົາບໍລິການທີ່ບໍ່ຖືກຄຸ້ມຄອງພາຍໃຕ້ສັນຍາຂອງການໄດ້ຮັບຜົນປະໂຫຍດຂອງຄົນເຈັບ (

ເຊັ່ນ: ຄົນເຈັບ HMO ຜູ້ທີ່ຂໍການບໍລິການນອກເຄືອຂ່າຍຈາກ Sutter, ຫລື ຄົນເຈັບທີ່ປະຕິເສດໂອນເງິນຈາກໂຮງໝໍຂອງ Sutter ໄປຫາສູນບໍລິການໃນເຄືອຂ່າຍ) ຈະບໍ່ໄດ້ຮັບສິດໃນການຊ່ວຍເຫລືອດ້ານການເງິນ

d) <u>ຄົນເຈັບທີ່ມີປະກັນໄພ ບໍ່ຮ່ວມມືກັບຜູ້ຈ່າຍບຸກຄົນທີສາມ:</u> ຄົນເຈັບທີ່ມີປະກັນໄພ ຜູ້ທີ່ມີປະກັນໂດຍຜູ້ຈ່າຍເງິນທີ່ເປັນບຸກຄົນທີສາມ ຊຶ່ງປະຕິເສດຈ່າຍຄ່າບໍລິການຍ້ອນວ່າຄົນເຈັບບໍ່ສາມາດໃຫ້ຂໍ້ມູນທີ່ຈຳເປັນແກ່ຜູ້ຈ່າຍເງິນທີ່ເປັນບຸກຄົນທີສາມ ເພື່ອກຳນົດໜີ້ສິນຂອງຜູ້ຈ່າຍເງິນທີ່ເປັນບຸກຄົນທີສາມ ຈະບໍ່ມີສິດໄດ້ຮັບການຊ່ວຍເຫລືອດ້ານການເງິນ.

e) <u>ຜູ້ຈ່າຍເງິນ ຈ່າຍເງິນໃຫ້ຄົນເຈັບໂດຍກົງ:</u> ຖ້າວ່າຄົນເຈັບໄດ້ຮັບເງິນຄ່າບໍລິການໂດຍກົງຈາກຄ່າປັບໄໝ, ການດູແລສຸຂະພາບເພີ່ມເຕີມ, ຫຼື ຄົນຈ່າຍອື່ນ ຄົນເຈັບຈະບໍ່ມີສິດໄດ້ຮັບການຊ່ວຍເຫລືອດ້ານການເງິນສຳລັບການບໍລິການ.

f) <u>ຂໍ້ມູນທີ່ບໍ່ມີຄວາມຈິງ</u>: ໂຮງໝໍອາດຈະປະຕິເສດໃຫ້ການຊ່ວຍເຫລືອດ້ານການເງິນແກ່ຄົນເຈັບທີ່ໃຫ້ຂໍ້ມູນທີ່ບໍ່ມີຄວາມຈິງກ່ຽວກັບລາຍໄດ້ຂອງຄອບຄົວ, ຈຳນວນຂອງຄົນໃນຄອບຄົວ ຫຼື ຂໍ້ມູນອື່ນໆໃນການສະໝັກຂໍສິດຂອງພວກເຂົາ.

g) <u>ການກັບຄືນສູ່ສະພາບເດີມຂອງບຸກຄົນທີສາມ</u>: ຖ້າຄົນເຈັບໄດ້ຮັບການຊຳລະໜີ້ທີ່ເປັນເງິນ ຫຼື ໄດ້ຮັບການຕັດສິນຈາກຜູ້ລະເມີດ ທີ່ເປັນສາຍເຫດເຮັດໃຫ້ຄົນເຈັບໄດ້ຮັບບາດເຈັບ, ຄົນເຈັບຕ້ອງໃຊ້ເງິນຈຳນວນທີ່ຊຳລະ ຫຼື ໄດ້ຮັບການຕັດສິນ ເພື່ອເຮັດໃຫ້ຍອດຄົງເຫລືອໃນບັນຊີຂອງຄົນເຈັບຖືກຕ້ອງ ແລະ ບໍ່ມີສິດໄດ້ຮັບການຊ່ວຍເຫລືອດ້ານການເງິນ.

h) <u>ການບໍລິການດ້ານວິຊາຊີບ (ແພດ-ໝໍ):</u> ການບໍລິການຂອງແພດ ເຊັ່ນ: ແພດຊ່ຽວຊານວາງຢາສະລົບ ຫຼື ຢາມຶນ, ແພດສ່ອງລັງສີ, ແພດປະຈຳໂຮງໝໍ, ແພດຊ່ຽວຊານດ້ານການບົ່ງມະຕິພະຍາດ ແລະ ອື່ນໆ ຈະບໍ່ໄດ້ຮັບການຄຸ້ມຄອງພາຍໃຕ້ນະໂຍບາຍນີ້. ສິ່ງທີ່ຄາດຫວັງຕ່າງໆໄດ້ກຳນົດໄວ້ໃນ ເອກະສານ A. ແພດຫລາຍຄົນມີນະໂຍບາຍການເບິ່ງແຍງຈາກມູນນິທິ ທີ່ອະນຸຍາດໃຫ້ຄົນເຈັບສະໝັກຂໍການດູແລຟຣີ ຫລື ຫລຸດລາຄາ. ຄົນເຈັບຄວນຈະໄດ້ຮັບຂໍ້ມູນກ່ຽວກັບໂຍບາຍການເບິ່ງແຍງຈາກມູນນິທິຂອງທ່ານໝໍໂດຍກົງຈາກແພດຂອງພວກເຂົາ.

B. ຂະບວນການສະໝັກ

1. ໂຮງໝໍແຕ່ລະແຫ່ງ ຈະໃຊ້ທຸກຄວາມພະຍາຍາມຢ່າງສົມເຫດສົມຜົນໃນການຮັບເອົາຂໍ້ມູນສ່ວນຕົວ ຫຼື ປະກັນສຸຂະພາບຂອງຮັຖຈາກຄົນເຈັບ ຫຼື ຍາດພີ່ນ້ອງຂອງພວກເຂົາ ທີ່ອາດຈະໄດ້ຮັບການຄຸ້ມຄອງທັງໝົດ ຫຼື ສ່ວນໃດສ່ວນໜຶ່ງສຳລັບຄ່າໃຊ້ຈ່າຍໃນການດູແລຈາກໂຮງໝໍໃຫ້ແກ່ຄົນເຈັບ. ໃນເວລາໃດກໍ່ຕາມທີ່ ຄົນເຈັບຜູ້ທີ່ສະແດງຄວາມບົກພ່ອງທາງດ້ານການເງິນໃນການຈ່າຍຄ່າໃບບິນແກ່ການບໍລິການຂອງໂຮງໝໍ ຈະໄດ້ຮັບການປະເມີນສຳລັບການຊ່ວຍເຫລືອດ້ານການເງິນ. ເພື່ອໃຫ້ມີຄຸນສົມບັດເປັນຄົນເຈັບທີ່ບໍ່ມີປະກັນ

ໄພ, ຄົນເຈັບ ຫຼື ຜູ້ຄ້ຳປະກັນຂອງຄົນເຈັບ ຕ້ອງພິສູດວ່າລາວບໍ່ໄດ້ຮັບຮູ້ສິດທິຕ່າງໆຂອງປະກັນໄພ ຫຼື ຜົນປະໂຫຍດຈາກໂປຣແກຣມຂອງຣັຖບານທີ່ຈະຄຸ້ມຄອງ ຫຼື ໄດ້ຮັບສ່ວນຫລຸດໃນໃບບິນ. ຄົນເຈັບທຸກຄົນຈະໄດ້ຮັບການສົ່ງເສີມໃຫ້ສຳຫລວດສິດທິທີ່ມີຄວາມເປັນໄປໄດ້ຂອງພວກເຂົາສຳລັບການຊ່ວຍເຫລືອໂປຣແກຣມຂອງຣັຖບານ ຖ້າວ່າພວກເຂົາບໍ່ໄດ້ເຮັດສິ່ງນັ້ນໄປແລ້ວ.

2. ຄົນເຈັບຜູ້ທີ່ຕ້ອງການສະໝັກຂໍການຊ່ວຍເຫລືອດ້ານການເງິນ ຈະໃຊ້ແບບຟອມສະໝັກທີ່ເປັນມາດຕະຖານຂອງ Sutter Health, “ໃບສະໝັກຂໍການຊ່ວຍເຫລືອດ້ານການເງິນ”, ເອກະສານ B.

3. ຄົນເຈັບອາດຈະຂໍການຊ່ວຍເຫລືອໃຫ້ຂຽນແບບຟອມຂໍການຊ່ວຍເຫລືອດ້ານການເງິນດ້ວຍຕົວເອງ ຢູ່ໃນບັນດາໂຮງໝໍຂອງ Sutter Health ທີ່ສາມາດເຫັນໄດ້ໃນເອກະສານ A, ທາງໂທລະສັບທີ່ໝາຍເລກ 855-398-1633, ຜ່ານການໃຊ້ອີເມວ໌, ຫຼື ຜ່ານເວັບໄຊຂອງ Sutter Health (www.sutterhealth.org).

4. ຄົນເຈັບຄວນຈະສົ່ງແບບຟອມທາງໄປສະນີເພື່ອຂໍ້ການຊ່ວຍເຫລືອດ້ານການເງິນ ໄປທີ່ Sutter Health, P. O. Box 619010, Roseville, CA 95661-9998 Attn: ການສະໝັກຂໍການຊ່ວຍເຫລືອການເບິ່ງແຍງຈາກມູນນິທິ.

5. ຄົນເຈັບຄວນຈະຂຽນໃບສະໝັກຂໍການຊ່ວຍເຫລືອດ້ານການເງິນໃຫ້ໄວເທົ່າທີ່ຈະເຮັດໄດ້ ຫລັງຈາກທີ່ໄດ້ຮັບການບໍລິການຈາກໂຮງໝໍ. ຖ້າບໍ່ສາມາດຂຽນໃບສະໝັກໃຫ້ສຳເລັດ ແລະ ສົ່ງໃບສະໝັກໄປພາຍໃນ 240 ວັນ ນັບຈາກວັນທີທີ່ໂຮງໝໍໄດ້ສົ່ງໃບບິນກ່ອນຈະຈ່າຍເງິນໄປຫາຄົນເຈັບຄັ້ງທຳອິດ ອາດຈະເຮັດໃຫ້ຖືກປະຕິເສດໄດ້ຮັບການຊ່ວຍເຫລືອດ້ານການເງິນ.

C. ຄຳຕັດສິນຂອງການຊ່ວຍເຫລືອດ້ານການເງິນ

1. ໂຮງໝໍຈະພິຈາລະນາໃບສະໝັກຂອງຜູ້ສະໝັກແຕ່ລະຄົນ ສຳລັບການຊ່ວຍເຫລືອດ້ານການເງິນ ແລະ ໄດ້ຮັບການຊ່ວຍເຫລືອດ້ານການເງິນເມື່ອຄົນເຈັບມີຕາມເກນທີ່ກຳນົດ ດັ່ງທີ່ໄດ້ລະບຸໄວ້ໃນພາກ A.1 ແລະ ໄດ້ຮັບ (ຫຼື ຈະໄດ້ຮັບ) ການບໍລິການຂອງໂຮງໝໍ.

2. ຄົນເຈັບຍັງອາດຈະສະໝັກຂໍການຊ່ວຍເຫລືອຂອງໂປຣແກຣມຂອງຣັຖບານ ຊຶ່ງອາດຈະຕ້ອງມີຄວາມລະວັງ ຖ້າວ່າຄົນເຈັບສະເພາະໃດໜຶ່ງຕ້ອງການບໍລິການແບບຕໍ່ເນື່ອງ.

    a) ໂຮງໝໍຄວນຈະຊ່ວຍຄົນເຈັບໃນການກຳນົດ ຖ້າວ່າພວກເຂົາມີສິດໄດ້ຮັບການຊ່ວຍເຫລືອຈາກຣັຖບານ ຫຼື ການຊ່ວຍເຫລືອອື່ນໆ, ຫຼື ຖ້າວ່າຄົນເຈັບມີສິດລົງທະບຽນໃນບັນດາແຜນທີ່ຢູ່ໃນການແລກປ່ຽນຜົນປະໂຫຍດດ້ານສຸຂະພາບຂອງຣັຖແຄລີຟໍເນັຍ (ຕົວຢ່າງ: ຣັຖແຄລີຟໍເນັຍທີ່ໄດ້ຮັບການຄຸ້ມຄອງ).

b) ຖ້າວ່າຄົນເຈັບສະໝັກ ຫຼື ມີໃບສະໝັກທີ່ກຳລັງລໍຖ້າຄຳຕັດສິນສຳລັບໂປຣແກຣມການຄຸ້ມຄອງອື່ນໃນເວລາດຽວກັນທີ່ລາວສະໝັກຂໍການຊ່ວຍເຫລືອດ້ານການເງິນ, ໃບສະໝັກສຳລັບການຄຸ້ມຄອງພາຍໃຕ້ໂປຣແກຣມການຄຸ້ມຄອງສຸຂະພາບອື່ນ ຈະບໍ່ກີດກັ້ນສິດຂອງຄົນເຈັບໃນການຊ່ວຍເຫລືອດ້ານການເງິນ.

3. ເມື່ອມີການຕັດສິນຂອງມູນນິທິເພື່ອການດູແລ ຫຼື ການເບິ່ງແຍງຈາກມູນນິທິ ການປິ່ນປົວສຸຂະພາບມູນຄ່າສູງ, “ໃບແຈ້ງການ” (ເອກະສານ D) ຈະຖືກສົ່ງໄປໃຫ້ຜູ້ສະໝັກແຕ່ລະຄົນ ຊຶ່ງແນະນຳຄຳຕັດສິນຂອງໂຮງໝໍ.

4. ເຊື່ອວ່າຄົນເຈັບຈະມີສິດໄດ້ຮັບການຊ່ວຍເຫລືອດ້ານການເງິນເປັນກຳນົດເວລາໜຶ່ງປີຫລັງຈາກທີ່ໂຮງໝໍອອກໃບແຈ້ງການໄປຫາຄົນເຈັບ. ຫລັງຈາກໜຶ່ງປີ, ຄົນເຈັບຕ້ອງສະໝັກຂໍການຊ່ວຍເຫລືອດ້ານການເງິນຄືນໃໝ່.

5. ຖ້າວ່າຄຳຕັດສິນຂອງການຊ່ວຍເຫລືອດ້ານການເງິນ ສ້າງສົມດຸນທາງດ້ານສິນເຊື່ອໃນດ້ານຂອງຄົນເຈັບ, ການຈ່າຍເງິນຄືນຂອງສົມດຸນທາງດ້ານສິນເຊື່ອຈະລວມມີດອກເບ້ຍຂອງຈຳນວນເງິນທີ່ຈ່າຍເກີນ ນັບຈາກວັນທີ່ທີ່ຄົນເຈັບຈ່າຍໄປດ້ວຍອັດຕາທີ່ກົດໝາຍກຳນົດ (10% ຕໍ່ປີ) ໂດຍສອດຄ່ອງກັບກົດໝາຍສຸຂະພາບ ແລະ ຄວາມປອດໄພ, ພາກ 127440, ຊຶ່ງລະບຸວ່າ ໂຮງໝໍຈະບໍ່ຖືກຮຽກຮ້ອງໃຫ້ສົ່ງເງິນທີ່ເປັນຍອດຄົງເຫລືອຂອງສິນເຊື່ອທີ່ຮ່ວມກັບດອກເບ້ຍ, ໜ້ອຍກ່ວາຫ້າໂດລາ ($5).

D. ການຂັດຄ້ານ

ຄົນເຈັບສາມາດຊອກຫາການທົບທວນຄຳຕັດສິນຈາກໂຮງໝໍ ໃນການປະຕິເສດການຊ່ວຍເຫລືອດ້ານການເງິນ ໂດຍການແຈ້ງໃຫ້ບຸກຄົນທີ່ຮັບຜິດຊອບດ້ານການເງິນຢູ່ໂຮງໝໍ ຫຼື ຜູ້ທີ່ໄດ້ຮັບມອບໝາຍ ບົນພື້ນຖານຂອງການຄັດຄ້ານ ແລະ ການອອກຄຳຕັດສິນພາຍໃນ (30) ວັນ ນັບແຕ່ຄົນເຈັບໄດ້ຮັບແຈ້ງການເງື່ອນໄຂທີ່ຍົກບັນຫາທີ່ຂັດຄ້ານ. ຄົນເຈັບສາມາດສະເໜີຂັດຄ້ານດ້ວຍປາກເປົ່າ ຫຼື ດ້ວຍການຂຽນເປັນລາຍລັກອັກສອນ. ບຸກຄົນທີ່ຮັບຜິດຊອບດ້ານການເງິນສຳລັບການເງິນຢູ່ໂຮງໝໍ ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຈະທົບທວນການຂັດຄ້ານຂອງຄົນເຈັບໃຫ້ໄວເທົ່າທີ່ຈະເຮັດໄດ້ ແລະ ແຈ້ງໃຫ້ຄົນເຈັບຮັບຊາບກ່ຽວກັບຄຳຕັດສິນດ້ວຍການຂຽນເປັນລາຍລັກອັກສອນ.

E. ການມີຂໍ້ມູນການຊ່ວຍເຫລືອດ້ານການເງິນ

1. **<u>ພາສາ</u>**: ນະໂຍບາຍນີ້ຈະມີໃຫ້ເປັນພາສາຫລັກຢູ່ໃນພື້ນທີ່ບໍລິການຂອງໂຮງໝໍ. ນອກຈາກນັ້ນ, ທຸກແຈ້ງການ/ການສື່ສານ ທີ່ຢູ່ໃນພາກນີ້ ຈະມີເປັນພາສາຫລັກໃນພື້ນທີ່ບໍລິການຂອງໂຮງໝໍ ແລະ ຢູ່ໃນຮູບແບບທີ່ສອດຄ່ອງກັບກົດໝາຍ ແລະ ກົດລະບຽບຂອງຣັຖບານກາງ ແລະ ຣັຖທີ່ກ່ຽວຂ້ອງ.

2. **<u>ຂໍ້ມູນທີ່ສະໜອງໃຫ້ຄົນເຈັບໃນຊ່ວງທີ່ມີເງື່ອນໄຂການບໍລິການຢູ່ໃນໂຮງໝໍ</u>**:

    a) <u>ກ່ອນການເຂົ້ານອນໃນໂຮງໝໍ ຫຼື ການລົງທະບຽນ</u>: ກ່ອນການເຂົ້ານອນໂຮງໝໍ ຫຼື ລົງທະບຽນ (ຫຼື ໃນບໍ່ຊ້າທີ່ໄດ້ປະຕິບັດ) ໂຮງໝໍຈະສຳເນົາເອກະສານ E ໃຫ້ຄົນເຈັບທຸກຄົນ ຊຶ່ງລວມມີ: ໃບສັງລວມນະໂຍບາຍຂອງການຊ່ວຍເຫລືອດ້ານການເງິນ ເປັນພາສາທີ່ເຂົ້າໃຈງ່າຍ ແລະ ຍັງບັນຈຸຂໍ້ມູນກ່ຽວກັບສິດທິຂອງພວກເຂົາ ເພື່ອຮຽກຮ້ອງການປະເມີນຄວາມຮັບຜິດຊອບດ້ານການເງິນຂອງພວກເຂົາກ່ຽວກັບການບໍລິການ. ໂຮງໝໍຈະກຳນົດພະແນກທີ່ຄົນເຈັບສາມາດເຂົ້າໄປຢ້ຽມຢາມ ເພື່ອຮັບເອົາຂໍ້ມູນ ແລະ ການຊ່ວຍເຫລືອໃນການສະໝັກຂໍການຊ່ວຍເຫລືອດ້ານການເງິນ.

    b) <u>ທີ່ປຶກສາຂໍການຊ່ວຍເຫລືອດ້ານການເງິນ</u>: ຄົນເຈັບຜູ້ທີ່ອາດຈະເປັນຄົນເຈັບທີ່ບໍ່ມີປະກັນໄພ ຈະມີທີ່ປຶກສາດ້ານການເງິນທີ່ໄດ້ຮັບມອບໝາຍ, ຊຶ່ງເປັນຜູ້ທີ່ຈະເຂົ້າຢ້ຽມຢາມຄົນເຈັບໂຕຕໍ່ໂຕຢູ່ໃນໂຮງໝໍ. ທີ່ປຶກສາດ້ານການເງິນຈະເອົາໃບສະໝັກຂໍການຊ່ວຍເຫລືອດ້ານການເງິນໃຫ້ຄົນເຈັບດັ່ງກ່າວ, ລວມທັງ ຂໍ້ມູນການຕິດຕໍ່ຫາບຸກຄະລາກອນຢູ່ໃນໂຮງໝໍ ຜູ້ທີ່ສາມາດໃຫ້ຂໍ້ມູນເພີ່ມເຕີມກ່ຽວກັບນະໂຍບາຍການຊ່ວຍເຫລືອດ້ານການເງິນນີ້ ແລະ ຊ່ວຍແນະນຳຂັ້ນຕອນຂອງການສະໝັກ.

    c) <u>ບໍລິການສຸກເສີນ</u>: ໃນກໍລະນີມີການບໍລິການສຸກເສີນ, ໂຮງໝໍຈະໃຫ້ໃບສັງລວມຫຍໍ້ຂອງນະໂຍບາຍການຊ່ວຍເຫລືອດ້ານການເງິນທີ່ເປັນພາສາທີ່ເຂົ້າໃຈງ່າຍໃຫ້ຄົນເຈັບຢ່າງຮີບດ່ວນ ຫລັງຈາກທີ່ເຫັນວ່າສະພາບການເບິ່ງແຍງສຸຂະພາບຂອງຄົນເຈັບໃນເວລາສຸກເສີນ ເປັນປົກກະຕິແລ້ວ ຫຼື ໃນເວລາອອກຈາກສຸກເສີນແລ້ວ.

d) ໃບສະໝັກທີ່ໃຫ້ໃນເວລາອອກມາ: ໃນເວລາອອກມາແລ້ວ, ໂຮງໝໍຈະສະເໜີເອກະສານ E ໃຫ້ຄົນເຈັບທຸກຄົນ, ຊຶ່ງລວມມີ ສັງລວມຫຍໍ້ຂອງນະໂຍບາຍການຊ່ວຍເຫລືອດ້ານການເງິນທີ່ເປັນພາສາທີ່ເຂົ້າໃຈງ່າຍ ແລະ ຄົນເຈັບທີ່ບໍ່ມີປະກັນໄພທຸກຄົນ ທີ່ມີໃບສະໝັກຂໍ Medi-Cal ແລະ ການບໍລິການຂອງເດັກນ້ອຍຢູ່ໃນຣັຖແຄລີຟໍເນັຍ ຫຼື ໂປຣແກຣມອື່ນໆຂອງຣັຖບານທີ່ມີຄວາມເປັນໄປໄດ້.

3. **ຂໍ້ມູນທີ່ມີໃຫ້ຄົນເຈັບໃນເວລາອື່ນ**:

a) ຂໍ້ມູນຕິດຕໍ່: ຄົນເຈັບສາມາດໂທຫາ 1-855-398-1633 ຫຼື ຕິດຕໍ່ຫາພະແນກຂອງໂຮງໝໍ ທີ່ມີຊື່ຢູ່ໃນເອກະສານ G ເພື່ອຮັບເອົາຂໍ້ມູນເພີ່ມເຕີມກ່ຽວກັບການຊ່ວຍເຫລືອດ້ານການເງິນ ແລະ ການຊ່ວຍເຫລືອໃນຂະບວນການສະໝັກ.

b) ແຈ້ງການຢູ່ໃນໃບບິນ: ໂຮງໝໍຈະສົ່ງໃບບິນໃຫ້ຄົນເຈັບຕາມນະໂຍບາຍຂອງການອອກໃບບິນ ແລະ ການເກັບເງິນຂອງໂຮງໝໍ Sutter Health. ແຈ້ງການຢູ່ໃນໃບບິນໃຫ້ຄົນເຈັບ ຈະປະກອບມີ: ເອກະສານ E, ຊຶ່ງລວມມີ ສັງລວມຫຍໍ້ຂອງນະໂຍບາຍການຊ່ວຍເຫລືອດ້ານການເງິນທີ່ເປັນພາສາທີ່ເຂົ້າໃຈໄດ້ງ່າຍ, ໝາຍເລກໂທລະສັບຂອງຄົນເຈັບໂທຫາເພື່ອສອບຖາມກ່ຽວກັບການຊ່ວຍເຫລືອດ້ານການເງິນ ແລະ ທີ່ຢູ່ໃນເວັບໄຊ ຊຶ່ງເປັນບ່ອນທີ່ຄົນເຈັບສາມາດໄດ້ຮັບຂໍ້ມູນເພີ່ມເຕີມກ່ຽວກັບການຊ່ວຍເຫລືອດ້ານການເງິນລວມທັງນະໂຍບາຍການຊ່ວຍເຫລືອດ້ານການເງິນ, ສັງລວມຫຍໍ້ຂອງນະໂຍບາຍການຊ່ວຍເຫລືອດ້ານການເງິນທີ່ເປັນພາສາທີ່ເຂົ້າໃຈງ່າຍ ແລະ ໃບສະໝັກຂໍການຊ່ວຍເຫລືອດ້ານການເງິນ. ບົດສັງລວມຫຍໍ້ຂອງສິດທາງດ້ານກົດໝາຍແມ່ນປະກອບຢູ່ໃນ ເອກະສານຄັດຕິດ F, ແລະ ຍັງມີຢູ່ໃນແຈ້ງການອອກໃບບິນສະບັບສຸດທ້າຍຂອງຄົນເຈັບ.

c) ຕາມການຮຽກຮ້ອງ: ໂຮງໝໍຈະເອົາສຳເນົາທີ່ເປັນເຈ້ຍກ່ຽວກັບນະໂຍບາຍການຊ່ວຍເຫລືອດ້ານການເງິນ, ໃບສະໝັກຂໍການຊ່ວຍເຫລືອດ້ານການເງິນ ແລະ ສັງລວມຫຍໍ້ຂອງນະໂຍບາຍການຊ່ວຍເຫລືອດ້ານການເງິນທີ່ເປັນພາສາທີ່ເຂົ້າໃຈງ່າຍ ໃຫ້ຄົນເຈັບ ຖ້າຄົນເຈັບຮຽກຮ້ອງໂດຍບໍ່ມີຄ່າໃຊ້ຈ່າຍ.

4. **ການເຜີຍແຜ່ຂໍ້ມູນກ່ຽວກັບການຊ່ວຍເຫລືອດ້ານການເງິນ**:

a) ການປະກາດເຜີຍແຜ່ທາງສາທາລະນະ: ໂຮງໝໍຈະປະກາດນະໂຍບາຍການຊ່ວຍເຫລືອດ້ານການເງິນ, ໃບສະໝັກຂໍການຊ່ວຍເຫລືອດ້ານການເງິນ ແລະ ສັງລວມຫຍໍ້ຂອງນະໂຍບາຍການຊ່ວຍເຫລືອດ້ານການເງິນທີ່ເປັນພາສາທີ່ເຂົ້າໃຈງ່າຍ ໃນສະຖານທີ່ ທີ່ສາມາດແນມເຫັນໄດ້ງ່າຍຢູ່ໃນຫ້ອງສຸກເສີນ, ເຂດຮັບຕ້ອນຄົນເຈັບ ແລະ ສະຖານທີ່ອື່ນໆບ່ອນທີ່ມີການສັນຈອນໜາແໜ້ນ, ລວມທັງ ຫ້ອງລໍຖ້າ, ຫ້ອງການອອກໃບບິນ ແລະ ສະຖານທີ່ບໍລິການຄົນເຈັບນອກຂອງໂຮງໝໍ ໂດຍບໍ່ມີຂອບເຂດຈຳກັດ. ແຈ້ງການສູ່ມະຫາຊົນເຫລົ່ານີ້ ຈະລວມມີຂໍ້ມູນກ່ຽວກັບສິດໃນການຮຽກຮ້ອງການປະເມີນຄວາມຮັບຜິດຊອບດ້ານການເງິນສຳລັບການບໍລິການ.

b) <u>ເວັບໄຊ</u>: ນະໂຍບາຍຂອງການຊ່ວຍເຫລືອດ້ານການເງິນ, ໃບສະໝັກຂໍການຊ່ວຍເຫລືອດ້ານການເງິນ ແລະ ສັງລວມຫຍໍ້ຂອງນະໂຍບາຍການຊ່ວຍເຫລືອດ້ານການເງິນທີ່ເປັນພາສາທີ່ເຂົ້າໃຈງ່າຍ ໃນສະຖານທີ່ ທີ່ສາມາດແນມເຫັນໄດ້ງ່າຍຢູ່ເວັບໄຊຂອງ Sutter Health (www.sutterhealth.org) ແລະ ຢູ່ໃນເວັບໄຊຂອງໂຮງໝໍແຕ່ລະແຫ່ງ. ບຸກຄົນທີ່ຕ້ອງການຂໍ້ມູນກ່ຽວກັບການຊ່ວຍເຫລືອດ້ານການເງິນ ຈະບໍ່ຖືກຮຽກຮ້ອງໃຫ້ສ້າງບັນຊີ ຫລື ສະໜອງຂໍ້ມູນສ່ວນຕົວໃດໆກ່ອນຈະໄດ້ຮັບຂໍ້ມູນກ່ຽວກັບການຊ່ວຍເຫລືອດ້ານການເງິນ.

c) <u>ສົ່ງທາງປະສະນີ</u>: ຄົນເຈັບສາມາດຂໍສຳເນົານະໂຍບາຍຂອງການຊ່ວຍເຫລືອດ້ານການເງິນ, ໃບສະໝັກຂໍການຊ່ວຍເຫລືອດ້ານການເງິນ ແລະ ສັງລວມຫຍໍ້ຂອງນະໂຍບາຍການຊ່ວຍເຫລືອດ້ານການເງິນທີ່ເປັນພາສາທີ່ເຂົ້າໃຈງ່າຍ ໃຫ້ສົ່ງທາງໄປສະນີ, ໂດຍບໍ່ມີຄ່າໃຊ້ຈ່າຍຂອງຄົນເຈັບ.

d) <u>ການໂຄສະນາ/ການໃຫ້ຂໍ້ມູນແກ່ມະຫາຊົນ</u>: ໃນແຕ່ລະປີ ແລະ ເທົ່າທີ່ເຫັນວ່າຈຳເປັນ, Sutter Health ຈະໂຄສະນາກ່ຽວກັບການຊ່ວຍເຫລືອດ້ານການເງິນຢູ່ໂຮງໝໍ ລົງໃນໜັງສືພິມຫລັກຂອງຊຸມຊົນ ຈັດຕັ້ງປະຕິບັດໂດຍ Sutter Health ຫຼື ເມື່ອປະຕິບັດແນວນັ້ນແລ້ວບໍ່ສາມາດນຳໃຊ້ໄດ້, Sutter ຈະອອກປະກາດຂ່າວກ່ຽວກັບຂໍ້ມູນນີ້, ຫຼື ໃຊ້ວິທີການອື່ນທີ່ Sutter Health ເຫັນວ່າ ຈະສາມາດເຜີຍແຜ່ການສະໜອງນະໂຍບາຍ ໃຫ້ແກ່ຄົນເຈັບທີ່ໄດ້ຮັບຜົນໃນຊຸມຊົນຂອງພວກເຮົາ.

e) <u>ການຮັບຮູ້ຂອງຊຸມຊົນ</u>: Sutter Health ຈະເຮັດວຽກກັບບັນດາອົງກອນທີ່ຢູ່ໃນເຄືອຂ່າຍ, ແພດ, ຄລີນິກຂອງຊຸມຊົນ ແລະ ຜູ້ຈັດຫາດ້ານການດູແລສຸຂະພາບ ເພື່ອແຈ້ງໃຫ້ສະມາຊິກຂອງຊຸມຊົນ (ໂດຍສະເພາະຜູ້ທີ່ມີແນວໂນ້ມຕ້ອງການຄວາມຊ່ວຍເຫລືອດ້ານການເງິນ) ກ່ຽວກັບການສະໜອງການຊ່ວຍເຫລືອດ້ານການເງິນ.

F. ຄ່າໃຊ້ຈ່າຍອື່ນໆ

1. **<u>ເກັບບັນທຶກເອກະສານ</u>**:
ບັນທຶກຕ່າງໆກ່ຽວກັບການຊ່ວຍເຫລືອດ້ານການເງິນຕ້ອງສາມາດເຂົ້າເຖິງໄດ້. ໂຮງໝໍຕ້ອງເກັບຮັກສາຂໍ້ມູນກ່ຽວກັບຈຳນວນຄົນເຈັບທີ່ບໍ່ມີປະກັນໄພ ຜູ້ທີ່ໄດ້ຮັບການບໍລິການຈາກໂຮງໝໍ, ຈຳນວນໃບສະໝັກຂໍການຊ່ວຍເຫລືອດ້ານການເງິນທີ່ສຳເລັດ, ຈຳນວນທີ່ໄດ້ຮັບການອະນຸມັດ, ປະເມີນຈຳນວນເງິນທີ່ໄດ້ຮັບການຊ່ວຍເຫລືອເປັນໂດລາ, ຈຳນວນຂອງໃບສະໝັກທີ່ຖືກປະຕິເສດ ແລະ ເຫດຜົນຂອງການປະຕິເສດ. ນອກຈາກນັ້ນ, ບັນທຶກຕ່າງໆກ່ຽວກັບການຮັບຮອງຂອງຄົນເຈັບ ຫຼື ການປະຕິເສດການຊ່ວຍເຫລືອດ້ານການເງິນຄວນຈະເຂົ້າໄປໃນບັນຊີຂອງຄົນເຈັບ.

2. **<u>ແຜນເກັບເງິນ</u>**

ຄົນເຈັບສາມາດໄດ້ຮັບສິດໃນການວາງແຜນຈ່າຍເງິນ. ແຜນຈ່າຍເງິນຈະໄດ້ຮັບການນຳສະເໜີ ແລະ ເຈລະຈາຢູ່ໃນນະໂຍບາຍການເກັບເງິນ ແລະ ການອອກໃບບິນຂອງໂຮງໝໍ Sutter Health.

3. **<u>ໃບບິນ ແລະ ການເກັບເງິນ</u>**:
ໂຮງໝໍອາດຈະໃຊ້ຄວາມພະຍາຍາມໃນການເກັບເງິນຢ່າງມີເຫດຜົນເພື່ອຮັບເງິນຄ່າໃຊ້ຈ່າຍຈາກຄົນເຈັບ. ຂໍ້ມູນທີ່ມີຢູ່ໃນຂະບວນການສະໝັກເພື່ອການຊ່ວຍເຫລືອດ້ານການເງິນອາດຈະບໍ່ຖືກນຳໃຊ້ໃນຂະບວນຂອງການເກັບເງິນຂອງໂຮງໝໍ ຫຼື ຕົວແທນຜູ້ເກັບເງິນທີ່ໂຮງໝໍມອບໝາຍ. ກິດຈະກຳດ້ານການເກັບເງິນທົ່ວໄປອາດຈະລວມມີ: ການອອກຖະແຫລງການຂອງຄົນເຈັບ, ໂທຫາງໂທລະສັບ ແລະ ຫລັກຖານອ້າງອີງຂອງຖະແຫລງການ ໃຫ້ແກ່ຄົນເຈັບ ຫຼື ຜູ້ຄ້ຳປະກັນ. ບັນດາເຄືອຂ່າຍ ແລະ ພະແນກຕ່າງໆໃນວົງຈອນຂອງລາຍຮັບຕ້ອງພັດທະນາຂະບວນການ ເພື່ອຮັບປະກັນວ່າ: ຂໍ້ຂ້ອງໃຈຂອງຄົນເຈັບ ແລະ ການຮ້ອງທຸກກ່ຽວກັບໃບບິນໄດ້ຮັບການຄົ້ນຄ້ວາ ແລະ ແກ້ໄຂໃຫ້ຖືກຕ້ອງຕາມຄວາມເໝາະສົມ, ໂດຍມີການຕິດຕາມກັບຄົນເຈັບໃຫ້ທັນເວລາ. ຫຼື ຕົວແທນຜູ້ເກັບເງິນ ຈະບໍ່ມີໜ້າທີ່ເຄື່ອນໄຫວເກັບເງິນພິເສດ (ດັ່ງທີ່ກຳນົດໄວ້ຢູ່ໃນນະໂຍບາຍກ່ຽວກັບການອອກໃບບິນ ແລະ ການເກັບເງິນຂອງໂຮງໝໍ Sutter Health)ທ່ານສາມາດຂໍສຳເນົາຂອງ ນະໂຍບາຍກ່ຽວກັບການອອກໃບບິນ ແລະ ການເກັບເງິນຂອງໂຮງໝໍ ຟຣີຢູ່ເວັບໄຊຂອງ Sutter Health ຢູ່ທີ່ sutterhealth.org ໂດຍໂທໄປທີ່ 855-398-1633 ຫຼື ຢູ່ໃນຫ້ອງລົງທະບຽນຄົນເຈັບຂອງໂຮງໝໍ, ຫ້ອງການບໍລິການດ້ານການເງິນຂອງຄົນເຈັບ ແລະ ພະແນກສຸກເສີນ.

4. **<u>ການສົ່ງໄປທີ່ OSHPD</u>**:
ບັນດາໂຮງໝໍຂອງ Sutter Health ຈະສົ່ງນະໂຍບາຍຂອງການຊ່ວຍເຫລືອດ້ານການເງິນໄປທີ່ຫ້ອງການການວາງແຜນ ແລະ ການພັດທະນາດ້ານການດູແລສຸຂະພາບໃນທົ່ວລັຖ (Statewide Planning and Healthcare Development – OSHPD). ສາມາດໄດ້ຮັບນະໂຍບາຍໄດ້ຢູ່ທີ່ເວັບໄຊ OSHPD ທີ່: https://syfphr.oshpd.ca.gov/

5. **<u>ຈຳນວນເງິນຕາມທີ່ຢູ່ໃນໃບບິນ:</u>**
ໂດຍອີງຕາມກົດໝາຍລາຍຮັບພາຍໃນ ພາກທີ 1. 501(r)-5, Sutter ເລືອກໃຊ້ວິທີການຂອງMedicare ໃນການປະເມີນຈຳນວນເງິນທົ່ວໄປທີ່ອອກຢູ່ໃນໃບບິນ; ເຖິງຢ່າງໃດກໍ່ຕາມ, ຄົນເຈັບທີ່ໄດ້ຮັບສິດໃນການຊ່ວຍເຫລືອດ້ານການເງິນ ຈະບໍ່ມີຄວາມຮັບຜິດຊອບຕໍ່ຈຳນວນເງິນທີ່ຫລາຍກ່ວາຈຳນວນເງິນທີ່ອອກຢູ່ໃນໃບບິນ ຍ້ອນວ່າຄົນເຈັບທີ່ໄດ້ຮັບສິດນັ້ນບໍ່ຈ່າຍເງິນຈຳນວນໃດໆ.

ບ່ອນອີງ

ກົດໝາຍລາຍຮັບພາຍໃນ ພາກ 501(r)

ກົດໝາຍວ່າດ້ວຍກົດລະບຽບຂອງລັຖບານກາງ 26 1.501(r)-1 ຫາ 1.501(r)-7

ກົດໝາຍວ່າດ້ວຍສຸຂະພາບ ແລະ ຄວາມປອດໄພ ພາກ 124700 ຫາ 127446

ນະໂຍບາຍນີ້ ຕ້ອງອ່ານຮ່ວມກັບນະໂຍບາຍກ່ຽວກັບການອອກໃບບິນ ແລະ ເກັບເງິນຂອງໂຮງໝໍຂອງ Sutter Health (ນະໂຍບາຍການເງິນ 14-227).

ເອກະສານຄັດຕິດ

ເອກະສານ A – ຜູ້ສະໜອງທີ່ໄດ້ຮັບການຄຸ້ມຄອງ ແລະ ບໍ່ໄດ້ຮັບການຄຸ້ມຄອງຈາກນະໂຍບາຍ
ເອກະສານ B – ໃບສະໝັກຂໍການຊ່ວຍເຫລືອດ້ານການເງິນ
ເອກະສານ C – ເອກະສານຄິດໄລ່ການຊ່ວຍເຫລືອດ້ານການເງິນ
ເອກະສານ D – ໃບແຈ້ງການກ່ຽວກັບສິດໄດ້ຮັບການພິຈາລະນາຂອງການເບິ່ງແຍງຈາກມູນນິທິຂອງ Sutter Health
ເອກະສານ E – ຂໍ້ມູນການອອກໃບບິນທີ່ສຳຄັນໃຫ້ແກ່ຄົນເຈັບ
ເອກະສານ F – ແຈ້ງການທາງດ້ານສິດທິ
ເອກະສານ G – ບັນດາໂຮງໝໍໃນເຄືອຂ່າຍຂອງ Sutter Health, ທີ່ຢູ່ໃນປັດຈຸບັນ ແລະ ເວັບໄຊຂໍການຊ່ວຍເຫລືອດ້ານການເງິນ

ເອກະສານ A

ຜູ້ສະໜອງທີ່ໄດ້ຮັບການຄຸ້ມຄອງ ແລະ ບໍ່ໄດ້ຮັບການຄຸ້ມຄອງຈາກນະໂຍບາຍ

ຜູ້ສະໜອງທີ່ມີລາຍຊື່ຢູ່ http://www.sutterhealth.org/communitybenefit/financial-assistance.html **ຖືກຄຸ້ມຄອງ**ພາຍໃຕ້ນະໂຍບາຍນີ້.

ຜູ້ສະໜອງທີ່ມີລາຍຊື່ຢູ່ http://www.sutterhealth.org/communitybenefit/financial-assistance.html [**ບໍ່ຖືກຄຸ້ມຄອງ**ພາຍໃຕ້ນະໂຍບາຍນີ້

ເອກະສານ B

ໃບສະໝັກຂໍການຊ່ວຍເຫລືອດ້ານການເງິນ

ຊື່ຂອງຄົນເຈັບ _____ ຄູ່ສົມຣົດ

_____

ທີ່ຢູ່ _____ ເບີໂທລະສັບ

_____

ບັນຊີ# _____ SNN _____

_____

(ຄົນເຈັບ) (ຄູ່ສົມຣົດ)

ສະພາບຂອງຄອບຄົວ: ໃສ່ລາຍຊື່ຂອງຄູ່ສົມຣົດ, ຄູ່ຜົວເມຍທີ່ຢູ່ບ້ານດຽວກັນ, ຫຼື ເດັກນ້ອຍທີ່ມີອາຍຸຕ່ຳກ່ວາ 21 ປີ. ຖ້າວ່າຄົນເຈັບແມ່ນຄົນໜຸ່ມນ້ອຍ, ໃສ່ລາຍຊື່ພໍ່ແມ່, ຍາດພີ່ນ້ອງທີ່ດູແລ ແລະ ອ້າຍເອື້ອຍນ້ອງທຸກຄົນທີ່ມີອາຍຸຕ່ຳກ່ວາ 21 ປີ

ຊື່	ອາຍຸ	ສາຍພົວພັນ

ການວ່າຈ້າງ ແລະ ອາຊີບ

ນາຍຈ້າງ: _____ ຕຳແໜ່ງ:

_____

ຜູ້ຕິດຕໍ່ ແລະ ເບີໂທລະສັບ:

_____

ຖ້າວ່າມີທຸລະກິດຂອງຕົນເອງ,ໃຫ້ໃສ່ຊື່ຂອງທຸລະກິດ:

_____

ນາຍຈ້າງຂອງຄູ່ສົມຣົດ: _____ ຕຳແໜ່ງ:

_____

ຜູ້ຕິດຕໍ່ ແລະ ໝາຍເລກໂທລະສັບ:

_____

ຖ້າວ່າມີທຸລະກິດຂອງຕົນເອງ, ໃຫ້ໃສ່ຊື່ຂອງທຸລະກິດ:

_____

ລາຍໄດ້ປະຈຳເດືອນໃນປັດຈຸບັນ

ຄົນເຈັບ ຄອບຄົວອື່ນໆ

ເງິນເດືອນລວມ (ກ່ອນຫັກອາກອນ)

ເຕີ່ມໃສ່: ລາຍໄດ້ຈາກການດຳເນີນທຸລະກິດ (ຖ້າມີທຸລະກິດຂອງຕົນເອງ) _____ _____

ເຕີ່ມໃສ່: ລາຍໄດ້ອື່ນ:

ດອກເບ້ຍ ແລະ ເງິນປັນຜົນ _____ _____

ຈາກອະສັງຫາລິມະຊັບ ຫຼື ຊັບສິນສ່ວນຕົວ _____ _____

ປະກັນສັງຄົມ _____ _____

ອື່ນໆ (ລະບຸ): _____ _____

ຄ່າລ້ຽງດູ ຫຼື ລາຍຈ່າຍອຸດໜູນທີ່ໄດ້ຮັບ _____ _____

ຫັກອອກ: ຄ່າລ້ຽງດູ ຫຼື ລາຍຈ່າຍອຸດໜູນທີ່ໄດ້ຈ່າຍອອກໄປ _____ _____

ເທົ່າກັບ: ລາຍໄດ້ປະຈຳເດືອນໃນປັດຈຸບັນ _____ _____

ລາຍໄດ້ປະຈຳເດືອນໃນປັດຈຸບັນທັງໝົດ (ຕື່ມຄົນເຈັບ + ຄູ່ສົມຣົດໃສ່) _____ _____

ລາຍຮັບຈາກຂ້າງເທິງ _____ _____

ຈຳນວນພົນໃນຄອບຄົວ

ສະມາຊິກທັງໝົດຂອງຄອບຄົວ _____

(ຕື່ມຄົນເຈັບ, ພໍ່ແມ່ (ສຳລັບພໍ່ແມ່ທີ່ເປັນຄົນໜຸ່ມນ້ອຍ), ຄູ່ສົມຣົດ ແລະ ເດັກນ້ອຍຈາກຂ້າງເທິງ)

	ແມ່ນ	ບໍ່ແມ່ນ
ທ່ານມີປະກັນສຸຂະພາບບໍ?	□	□
ທ່ານມີປະກັນອື່ນທີ່ອາດຈະນຳໃຊ້ (ເຊັ່ນ: ນະໂຍບາຍກ່ຽວກັບລົດ) ບໍ?	□	□
ອາການບາດເຈັບຂອງທ່ານມີສາຍເຫດມາຈາກບຸກຄົນທີສາມ (ເຊັ່ນ: ເກີດຈາກອຸບັດຕິເຫດທາງລົດ ຫຼື ມື່ນ ແລະ ຕົກລົງມາ) ບໍ?	□	□

ໂດຍການເຊັນໃສ່ໃນແບບຟອມນີ້, ຂ້າພະເຈົ້າອະນຸຍາດໃຫ້ Sutter Health ກວດກາການຈ້າງງານເພື່ອການຕັດສິນຄຸນສົມບັດຂອງຂ້າພະເຈົ້າໃນສ່ວນຫລຸດດ້ານການເງິນ, ຂ້າພະເຈົ້າເຂົ້າໃຈວ່າ: ຂ້າພະເຈົ້າອາດຈະຖືກຮຽກຮ້ອງໃຫ້ນຳຫລັກຖານມາພິສູດຂໍ້ມູນທີ່ຂ້າພະເຈົ້າສະໜອງໃຫ້.

_____ _____

(ລາຍເຊັນຂອງພໍ່ແມ່ ຫຼື ຜູ້ຄ້ຳປະກັນ) (ວັນທີ)

_____ _____

(ລາຍເຊັນຂອງຄູ່ສົມຣົດ) (ວັນທີ)

ເອກະສານ C

ເອກະສານຄົດໄລ່ການຊ່ວຍເຫລືອດ້ານການເງິນ

ຊື່ຂອງຄົນເຈັບ: _____ ບັນຊີຂອງຄົນເຈັບ#: _____

ໂຮງໝໍ: _____

ການພິຈາລະນາ/ສະພາບການພິເສດ:_____

_____

_____

_____

	ແມ່ນ	ບໍ່ແມ່ນ
ຄົນເຈັບໄດ້ຮັບການປະກັນສຸຂະພາບບໍ?	□	□
ຄົນເຈັບມີສິດໄດ້ຮັບການຊ່ວຍເຫລືອຈາກ Medicare ບໍ?	□	□
ຄົນເຈັບມີສິດໄດ້ຮັບການຊ່ວຍເຫລືອຈາກ Medi-Cal?	□	□
ຄົນເຈັບມີສິດໄດ້ຮັບການຊ່ວຍເຫລືອຈາກໂປຣແກຣມອື່ນໆຂອງຣັຖບານບໍ (ຕົວຢ່າງ ຜູ້ເຄາະຮ້າຍຈາກຄະດີອາຍາ, ອື່ນໆ) ບໍ?	□	□

ຖ້າວ່າຄົນເຈັບສະໝັກ, ຫຼື ມີໃບສະໝັກທີ່ກຳລັງພິຈາລະນາຢູ່ ສຳລັບໂປຣແກຣມການຄຸ້ມຄອງສຸຂະພາບອື່ນໃນເວລາດຽວກັນທີ່ ລາວສະໝັກຂໍຈາກການເບິ່ງແຍງຈາກມູນນິທິຂອງໂຮງໝໍ ຫຼື ໂປຣແກຣມສ່ວນຫລຸດຄ່າໃຊ້ຈ່າຍ, ໃບສະໝັກດັ່ງກ່າວນັ້ນຈະບໍ່ໄດ້ ຮັບການກີດກັ້ນຈາກໂປຣແກຣມອື່ນ.

ຄົນເຈັບມີປະກັນໄພອື່ນ (ຕົວຢ່າງ: ປະກັນສຸຂະພາບຈາກອຸບັດຕິເຫດຂອງລົດ) ບໍ?	□	□
ຄົນເຈັບໄດ້ຮັບການປະກັນຈາກບຸກຄົນທີສາມບໍ?	□	□
ຄົນເຈັບໄດ້ຈ່າຍດ້ວຍຕົວເອງບໍ?	□	□

ການຄົດໄລ່ການຊ່ວຍເຫລືອດ້ານການເງິນ:

ລາຍໄດ້ທັງໝົດໃນປັດຈຸບັນຂອງຄອບຄົວໃນແຕ່ລະເດືອນ $_____

(ຈາກໃບສະໝັກຂໍການຊ່ວຍເຫລືອດ້ານການເງິນ)

ຈຳນວນພົນໃນຄອບຄົວ (ຈາກໃບສະໝັກຂໍການຊ່ວຍເຫລືອດ້ານການເງິນ) _____

ມີຄຸນສົມບັດສຳລັບການຊ່ວຍເຫລືອດ້ານການເງິນທີ່ເໝາະສົມ ແມ່ນ ບໍ່ແມ່ນ

ເອກະສານ D

ໃບແຈ້ງການ

SUTTER HEALTH

ຄຳຕັດສິນໃນການໄດ້ຮັບສິດສຳລັບການຊ່ວຍເຫລືອດ້ານການເງິນ

Sutter Health ໄດ້ຕັດສິນການໄດ້ຮັບສິດສຳລັບການຊ່ວຍເຫລືອດ້ານການເງິນ:

_____ _____ _____

ຊື່ຂອງຄົນເຈັບ ເລກບັນຊີ ວັນທີບໍລິການ

ຄົນເຈັບ ຫຼື ໃນນາມຂອງຄົນເຈັບ ຂໍການຊ່ວຍເຫລືອດ້ານການເງິນໃນວັນທີ_____.
ຄຳຕັດສິນນີ້ສຳເລັດໃນວັນທີ _____.

ອີງຕາມຂໍ້ມູນທີ່ຄົນເຈັບ ຫຼື ໃນນາມຄົນເຈັບ ສະໜອງໃຫ້ນັ້ນ, ມີຄຳຕັດສິນດັ່ງຕໍ່ໄປນີ້:

ການຊ່ວຍເຫລືອດ້ານການເງິນຂອງທ່ານໄດ້ຖືກຮັບຮອງເຮື່ອງການບໍລິການທີ່ຈັດຫາໃຫ້ໃນວັນ
ທີ_____.
ຫລັງຈາກສະໜັກຂໍການຊ່ວຍເຫລືອດ້ານການເງິນ ທ່ານເງິນຈຳນວນເປັນໜີ້ເຫລືອ $_____.

ຄຳຮ້ອງຂໍການຊ່ວຍເຫລືອດ້ານການເງິນຂອງທ່ານກຳລັງລໍຖ້າຮັບຮອງ. ເຖິງຢ່າງໃດກໍ່ຕາມ, ຂໍ້ມູນຕໍ່ໄປນີ້ແມ່ນມີຄວາມຈຳເປັນ ກ່ອນຈະມີການແກ້ໄຂໃນບັນຊີຂອງທ່ານ:

_____
_____
_____
_____
_____

ຄຳຮ້ອງຂໍການຊ່ວຍເຫລືອດ້ານການເງິນໄດ້ຖືກປະຕິເສດ ຍ້ອນວ່າ:

ເຫດຜົນ: _____
_____
_____
_____
_____

ການໃຫ້ຄວາມຊ່ວຍເຫລືອດ້ານການເງິນຈະຢູ່ພາຍໃຕ້ເງື່ອນໄຂທີ່ວ່າ: ຂໍ້ມູນທີ່ສະໜອງໃຫ້ໂຮງໝໍນັ້ນຕ້ອງສຳເລັດສົມບູນ ແລະ ຖືກຕ້ອງ. ໃນກໍລະນີທີ່ໂຮງໝໍຄົ້ນພົບວ່າ: ທ່ານໄດ້ຮັບບາດເຈັບຍ້ອນບຸກຄົນອື່ນ, ທ່ານມີລາຍໄດ້ເພີ່ມເຕີມ, ທ່ານມີປະກັນໄພເພີ່ມເຕີມ ຫຼື ໄດ້ສະໜອງຂໍ້ມູນທີ່ບໍ່ສົມບູນ ຫຼື ບໍ່ຖືກຕ້ອງ ກ່ຽວກັບຄວາມສາມາດໃນການຈ່າຍເງິນຄ່າບໍລິການທີ່ສະໜອງໃຫ້, ໂຮງໝໍອາດຈະຍົກເລີກຄຳຕັດສິນຂອງພວກເຂົາໃນການໃຫ້ຄວາມຊ່ວຍເຫລືອ ແລະ ມອບໃຫ້ທ່ານ ແລະ/ຫຼື ບຸກຄົນທີສາມ ຮັບຜິດຊອບຄ່າໃຊ້ຈ່າຍຂອງໂຮງໝໍ.

ຖ້າວ່າສະໝັກຂໍການຊ່ວຍເຫລືອຈາກໂປຣແກຣມຄຸ້ມຄອງສຸຂະພາບອື່ນໃນເວລາດຽວກັບສະໝັກຂໍການຊ່ວຍເຫລືອດ້ານການເງິນ, ສິດທີ່ຈະໄດ້ຮັບການຊ່ວຍເຫລືອທັງສອງນັ້ນຈະບໍ່ຖືກກີດກັ້ນຈາກໂປຣແກຣມອື່ນ.

ຖ້າທ່ານມີຄຳຖາມໃນການຕັດສິນນີ້, ກະລຸນາຕິດຕໍ່ຫາ:

_____

ບໍລິການດ້ານການເງິນຂອງຄົນເຈັບ
855-398-1633

ເອກະສານ E

ຂໍ້ມູນກ່ຽວກັບໃບບິນຂອງຄົນເຈັບ
ສັງລວມຫຍໍ້ເປັນພາສາທີ່ເຂົ້າໃຈງ່າຍ ກ່ຽວກັບການຊ່ວຍເຫລືອດ້ານການເງິນ

ຂໍຂອບໃຈທີ່ເລືອກ Sutter Health. ເອກະສານສະບັບນີ້ ໄດ້ຖືກອອກແບບເພື່ອຊ່ວຍໃຫ້ຄົນເຈັບຂອງພວກເຂົາເຂົ້າໃຈການຊ່ວຍເຫລືອດ້ານການເງິນສຳລັບຄົນເຈັບທີ່ມີສິດໄດ້ຮັບ, ຂະບວນການສະໝັກສຳລັບການຊ່ວຍເຫລືອດ້ານການເງິນ ແລະ ທາງເລືອກໃນການຈ່າຍເງິນຂອງທ່ານ. ໂຮງໝໍຂອງທ່ານຈະບໍ່ລວມເອົາບິນໃດໜຶ່ງສຳລັບການບໍລິການທີ່ທ່ານອາດຈະໄດ້ຮັບໃນເວລາທີ່ທ່ານນອນຢູ່ໃນໂຮງໝໍ ຈາກແພດ, ແພດຊ່ຽວຊານດ້ານການວາງຢາສະລົບ ຫຼື ຢາມຶນ, ຊ່ຽວຊານການບົ່ງມະຕິດ້ວຍອາການສະແດງອອກຂອງພະຍາດ, ບໍລິສັດລົດແພດສຸກເສີນ ແລະ ຜູ້ຈັດຫາອື່ນໆທີ່ອາດຈະສົ່ງໃບບິນເກັບເງິນໄປໃຫ້ທ່ານທີ່ແຍກອອກຕ່າງຫາກຈາກການບໍລິການຂອງພວກເຂົາ. ຖ້າທ່ານຕ້ອງການຂໍຄວາມຊ່ວຍເຫລືອໃຫ້ຊ່ວຍຈ່າຍຄ່າໃບບິນຂອງທ່ານຈາກຜູ້ຈັດຫາອື່ນ, ທ່ານຈະຕ້ອງຕິດຕໍ່ຫາຜູ້ຈັດຫາໂດຍກົງ.

ການບໍລິການສຸກເສີນ: ຖ້າທ່ານໄດ້ຮັບບໍລິການສຸກເສີນຢູ່ໂຮງໝໍ, ທ່ານຈະໄດ້ຮັບໃບບິນທີ່ແຍກອອກຕ່າງໆສຳລັບແພດຫ້ອງສຸກເສີນ.ຂໍ້ຂ້ອງໃຈຕ່າງໆກ່ຽວກັບການບໍລິການຂອງແພດຢູ່ໃນຫ້ອງສຸກເສີນຄວນຈະສອບຖາມໂດຍກົງຈາກແພດ.ແພດຫ້ອງສຸກເສີນ, ດັ່ງທີ່ໄດ້ກຳນົດຢູ່ໃນພາກ 127450 ຂອງກົດໝາຍວ່າດ້ວຍສຸຂະພາບ ແລະ ຄວາມປອດໄພ ຜູ້ທີ່ໃຫ້ບໍລິການດູແລສຸຂະພາບສຸກເສີນໃນໂຮງໝໍທີ່ໃຫ້ການດູແລສຸກເສີນ ແມ່ນກົດໝາຍໄດ້ຮຽກຮ້ອງຫລຸດລາຄາແກ່ຄົນເຈັບທີ່ບໍ່ມີປະກັນໄພ ຫຼື ຄົນເຈັບທີ່ມີປະກັນໄພແຕ່ມີມູນຄ່າການດູແລສຸຂະພາບສູງ ແລະ ເປັນຜູ້ທີ່ຢູ່ ຫຼື ຕ່ຳກ່ວາລະດັບຄວາມທຸກຍາກ 350%.

ທາງເລືອກໃນການຈ່າຍເງິນ: Sutter Health ມີຫລາຍທາງເລືອກທີ່ຈະຊ່ວຍທ່ານຈ່າຍເງິນຄ່າໃບບິນຂອງໂຮງໝໍຂອງທ່ານ.

ແຜນການຈ່າຍເງິນ: ຍອດຄົງເຫລືອໃນບັນຊີຂອງຄົນເຈັບແມ່ນກຳນົດໃນໃບບິນ. ຄົນເຈັບສາມາດເລືອກຈັດການກັບລາຍຈ່າຍສຳລັບໃບບິນຂອງໂຮງໝໍຂອງພວກເຂົາ. ສັນຍາກ່ຽວກັບການເງິນຕ້ອງໄດ້ຖືກເຊັນກ່ອນທີ່ ຫ້ອງການບໍລິການດ້ານການເງິນຂອງຄົນເຈັບ ສາມາດຮັບເອົາການຈັດການກັບລາຍຈ່າຍທີ່ອະນຸຍາດໃຫ້ຄົນເຈັບຈ່າຍຄ່າໃບບິນຂອງໂຮງໝໍຂອງພວກເຂົານອກເວລາທີ່ກຳນົດໃຫ້. ການຈັດການເຫລົ່ານີ້ແມ່ນບໍ່ມີດອກເບ້ຍສຳລັບຄົນເຈັບທີ່ບໍ່ມີປະກັນໄພ ແລະ ມີລາຍໄດ້ຕ່ຳ ແລະ ຄົນເຈັບບາງຄົນທີ່ມີລາຍໄດ້ທີ່ສາມາດມີສິດໄດ້ຮັບ ຊຶ່ງມີມູນຄ່າການດູແລສຸຂະພາບສູງ. ແຜນຈ່າຍເງິນແມ່ນສາມາດເຈລະຈາໄດ້ລະຫວ່າງໂຮງໝໍ ແລະ ຄົນເຈັບ.

ສິດທິຂອງ Medi-Cal ແລະ ໂປຣແກຣມຂອງຣັຖບານ: ທ່ານສາມາດມີສິດໄດ້ຮັບໂປຣແກຣມການຊ່ວຍເຫລືອສຸຂະພາບທີ່ຣັຖບານອຸດໜູນ. Sutter Healthມີພະນັກງານທີ່ຈະຊ່ວຍທ່ານສະໝັກຂໍໂປຣແກຣມຂອງຣັຖບານ ເຊັ່ນ: Medi-Cal. ກະລຸນາຕິດຕໍ່ຫາ ຫ້ອງການຊ່ວຍເຫລືອດ້ານການເງິນຂອງຄົນເຈັບ ທີ່ (855) 398-1633 ຖ້າທ່ານຕ້ອງການຂໍ້ມູນເພີ່ມເຕີມກ່ຽວກັບໂປຣແກຣມຂອງຣັຖບານ ຫຼື ຕ້ອງການຄວາມຊ່ວຍເຫລືອໃນການສະໝັກຂໍໂປຣແກຣມດັ່ງກ່າວ. ສິ່ງອຳນວຍຄວາມສະດວກນີ້ ຍັງມີສັນຍາກັບບັນດາອົງກອນທີ່ອາດຈະຊ່ວຍທ່ານສະໝັກຂໍການຊ່ວຍເຫລືອຂອງຣັຖບານ, ຖ້າວ່າຕ້ອງການ.

ການຄຸ້ມຄອງຂອງຣັຖແຄລີຟໍເນັຍ: ທ່ານສາມາດມີສິດໄດ້ຮັບການຄຸ້ມຄອງທາງດ້ານການດູແລສຸຂະພາບ ພາຍໃຕ້ການຄຸ້ມຄອງຂອງຣັຖແຄລີຟໍເນັຍ, ຊຶ່ງແມ່ນການແລກປ່ຽນຄວາມຊ່ວຍເຫລືອທາງດ້ານສຸຂະພາບຂອງຣັຖແຄລີຟໍເນັຍ ພາຍໃຕ້ ກົດໝາຍວ່າດ້ວຍການດູແລທີ່ສາມາດເຂົ້າເຖິງໄດ້. ຕິດຕໍ່ຫາພະແນກການຊ່ວຍເຫລືອດ້ານການເງິນ ຂອງໂຮງໝໍທີ່ (855) 398-1633 ສຳລັບລາຍລະອຽດເພີ່ມເຕີມ ແລະ ການຊ່ວຍເຫລືອ ເພື່ອກວດສອບວ່າທ່ານມີຄຸນສົມບັດເໝາະສົມໄດ້ຮັບການຄຸ້ມຄອງການດູແລສຸຂະພາບຜ່ານການຄຸ້ມຄອງຂອງຣັຖແຄລີຟໍເນັຍ ຫຼືບໍ່.

ສະຫລຸບການຊ່ວຍເຫລືອດ້ານການເງິນ (ການເບິ່ງແຍງຈາກມູນນິທິ): Sutter Health ມີພັນທະໃນການສະໜອງ ການຊ່ວຍເຫລືອດ້ານການເງິນໃຫ້ຄົນເຈັບທີ່ມີລາຍໄດ້ຕ່ຳທີ່ໄດ້ຮັບສິດ ຊຶ່ງເປັນຜູ້ທີ່ມີປະກັນໄພທີ່ຕ້ອງການໃຫ້ຄົນເຈັບຈ່າຍເງິນສ່ວນໃຫຍ່ຂອງການດູແລຂອງພວກເຂົາ. ຕໍ່ໄປນີ້ແມ່ນສັງລວມເງື່ອນໄຂຂອງການໄດ້ຮັບສິດສຳລັບການຊ່ວຍເຫລືອດ້ານການເງິນ ແລະ ຂະບວນການສະໝັກສຳລັບຄົນເຈັບທີ່ຕ້ອງການຂໍການຊ່ວຍເຫລືອດ້ານການເງິນ. ປະເພດຂອງຄົນເຈັບທີ່ມີສິດໄດ້ຮັບການຊ່ວຍເຫລືອດ້ານການເງິນ**ແມ່ນມີດັ່ງຕໍ່ໄປນີ້**:

- ຄົນເຈັບທີ່ບໍ່ມີບຸກຄົນທີສາມຈ່າຍໃຫ້, ເຊັ່ນ: ບໍລິສັດປະກັນໄພ ຫຼື ໂປຣແກຣມຂອງຣັຖບານ, ສຳລັບເງິນໃນສ່ວນໃດໜຶ່ງຂອງລາຍຈ່າຍດູແລສຸຂະພາບຂອງພວກເຂົາ **<u>ແລະ</u>** ມີລາຍໄດ້ຂອງຄອບຄົວຢູ່ທີ່ ຫຼື ຕ່ຳກ່ວາລະດັບຄວາມທຸກຍາກຂອງຣັຖບານກາງ 400%.

- ຄົນເຈັບທີ່ໄດ້ຮັບການຄຸ້ມຄອງຈາກປະກັນໄພ ແຕ່ວ່າມີ: (i) ລາຍໄດ້ຂອງຄອບຄົວຢູ່ທີ່ ຫຼື ຕ່ຳກ່ວາລະດັບຄວາມທຸກຍາກຂອງຣັຖບານກາງ 400%; **ແລະ** (ii) ລາຍຈ່າຍກ່ຽວກັບການດູແລສຸຂະພາບສຳລັບພວກເຂົາ ຫຼື ຄອບຄົວຂອງພວກເຂົາ (ທີ່ມີຢູ່ໃນໂຮງໝໍໃນເຄືອຂ່າຍ ຫຼື ໄດ້ຈ່າຍໃຫ້ກັບຜູ້ຈັດຫາອື່ນໆໃນ 12 ເດືອນທີ່ຜ່ານມາ) ທີ່ເກີນ 10% ຂອງລາຍໄດ້ຂອງຄອບຄົວຄົນເຈັບ.

- ບັນດາຄົນເຈັບທີ່ໄດ້ຮັບການຄຸ້ມຄອງຈາກປະກັນໄພ ແຕ່ວ່າໄດ້ໃຊ້ເງິນໝົດທັງກ່ອນ ຫຼື ໃນເວລາທີ່ພວກເຂົາພັກຢູ່ໃນໂຮງໝໍ ແລະ ມີລາຍໄດ້ຂອງຄອບຄົວຢູ່ທີ່ ຫຼື ຕ່ຳກ່ວາ ລະດັບຄວາມທຸກຍາກຂອງຣັຖບານກາງ 400%.

ທ່ານສາມາດສະໝັກຂໍການຊ່ວຍເຫລືອດ້ານການເງິນ ໂດຍການໃຊ້ໃບສະໝັກທີ່ມີໃຫ້ຈາກຫ້ອງການບໍລິການດ້ານການເງິນຂອງຄົນເຈັບ ຢູ່ພະແນກລົງທະບຽນ/ຮັບຕ້ອນຄົນເຈັບ ຢູ່ໃນໂຮງໝໍ ໂດຍທ່ານສາມາດໂທຫາຫ້ອງການບໍລິການດ້ານການເງິນຂອງຄົນເຈັບທີ່ໝາຍເລກ 855-398-1633, ຫຼື Sutter Health ຫຼື ເວັບໄຊທ໌ຂອງໂຮງໝໍ (www.sutterhealth.org). ທ່ານຍັງອາດຈະສົ່ງໃບສະໝັກໂດຍການສົນທະນາກັບຕົວແທນຈາກບໍລິການດ້ານການເງິນຂອງຄົນເຈັບ ຊຶ່ງເປັນຜູ້ທີ່ຈະຊ່ວຍທ່ານຂຽນໃບສະໝັກ. ໃນຂະບວນການສະໝັກ ທ່ານຈະຖືກຂໍໃຫ້ສະໜອງຂໍ້ມູນກ່ຽວກັບຈຳນວນຄົນໃນຄອບຄົວຂອງທ່ານ, ລາຍໄດ້ປະຈຳເດືອນຂອງທ່ານ ແລະ ຂໍ້ມູນອື່ນທີ່ຈະຊ່ວຍໃຫ້ໂຮງໝໍ ກຳນົດສິດທິຂອງທ່ານສຳລັບການຊ່ວຍເຫລືອດ້ານການເງິນ. ທ່ານອາດຈະຕ້ອງສະໜອງຫົວຂໍ້ນໃບຮັບເງິນ ຫຼື ບັນທຶກການເສຍອາກອນ ເພື່ອຊ່ວຍໃຫ້ Sutter ພິສູດລາຍໄດ້ຂອງທ່ານ.

ຫລັງຈາກທ່ານສົ່ງໃບສະໝັກ, ໂຮງໝໍຈະທົບທວນຂໍ້ມູນ ແລະ ແຈ້ງໃຫ້ທ່ານຊາບເປັນລາຍລັກອັກສອນກ່ຽວກັບສິດຂອງທ່ານ. ຖ້າທ່ານມີຂໍ້ຂ້ອງໃຈໃນຂະບວນຂອງການສະໝັກ, ທ່ານສາມາດຕິດຕໍ່ຫາບໍລິການດ້ານການເງິນຂອງຄົນເຈັບທີ່ (855) 398-1633.

ຖ້າທ່ານບໍ່ເຫັນດີກັບຄຳຕັດສິນຂອງໂຮງໝໍ, ທ່ານອາດຈະສົ່ງຂໍ້ຂັດຄ້ານໄປຫາ ຫ້ອງການບໍລິການດ້ານການເງິນຂອງຄົນເຈັບ.

ທ່ານສາມາດເອົາສຳເນົາຂອງ ນະໂຍບາຍການຊ່ວຍເຫລືອດ້ານການເງິນຂອງໂຮງໝໍນີ້, ບົດສັງລວມຫຍໍ້ ແລະ ໃບສະໝັກ ເປັນພາສາທີ່ເຂົ້າໃຈງ່າຍ, ພ້ອມທັງ ໃບສະໝັກຂໍໂປຣແກຣມຂອງລັຖບານທີ່ມີຫຼາຍພາສາດ້ວຍຕົນເອງ ທີ່ຫ້ອງການລົງທະບຽນຄົນເຈັບ ແລະ ບໍລິການດ້ານການເງິນຂອງຄົນເຈັບ ຫຼື ທາງເວັບໄຊທ໌sutterhealth.org, ແລະ ສາມາດສົ່ງໃຫ້ທາງໄປສະນີ ພວກເຮົາຍັງສາມາດສົ່ງສຳເນົານະໂຍບາຍການຊ່ວຍເຫລືອດ້ານການເງິນໃຫ້ທ່ານໂດຍບໍ່ເສຍຄ່າ ຖ້າທ່ານຕິດຕໍ່ຫາຫ້ອງການບໍລິການດ້ານການເງິນຂອງຄົນເຈັບທີ່ 855-398-1633.

ໂດຍອີງຕາມກົດໝາຍລາຍຮັບພາຍໃນ ພາກທີ 1. 501(r)-5, Sutter Healthເລືອກໃຊ້ວິທີການຂອງ Medicare ໃນການປະເມີນຈຳນວນເງິນຕາມທີ່ອອກຢູ່ໃນໃບບິນ; ເຖິງຢ່າງໃດກໍ່ຕາມ, ຄົນເຈັບທີ່ໄດ້ຮັບສິດໃນການຊ່ວຍເຫລືອດ້ານການເງິນ ຈະບໍ່ມີຄວາມຮັບຜິດຊອບຕໍ່ຈຳນວນເງິນທີ່ຫລາຍກ່ວາຈຳນວນເງິນທີ່ອອກຢູ່ໃນໃບບິນ ຍ້ອນວ່າຄົນເຈັບທີ່ໄດ້ຮັບສິດນັ້ນບໍ່ຈ່າຍເງິນຈຳນວນໃດໆ.

ໃບສະໝັກທີ່ກຳລັງດຳເນີນການຢູ່: ຖ້າສົ່ງໃບສະໝັກຂໍໂປຣແກຣມການຄຸ້ມຄອງສຸຂະພາບອື່ນໃນເວລາດຽວກັນທີ່ທ່ານສະໝັກຂໍການເບິ່ງແຍງຈາກມູນນິທິ, ຈະບໍ່ມີໃບສະໝັກໃດທີ່ຈະໄດ້ຮັບການກົດກັ້ນສຳລັບໂປຣແກຣມອື່ນ.

ແຈ້ງການກ່ຽວກັບການມີທຶນຊ່ວຍເຫລືອດ້ານການເງິນ ປະເມີນວ່າ: ທ່ານສາມາດຂໍການປະເມີນທີ່ຂຽນເປັນລາຍລັກອັກສອນ ທາງດ້ານຄວາມຮັບຜິດຊອບດ້ານການເງິນຂອງທ່ານສຳລັບການການບໍລິການກ່ຽວກັບໂຮງໝໍ. ການຂໍການປະເມີນ ຕ້ອງປະຕິບັດໃນຊ່ວໂມງຣັຖການ. ການປະເມີນຈະມີໃຫ້ທ່ານ ໂດຍເປັນການປະເມີນຈຳນວນເງິນທີ່ໂຮງໝໍຈະຮຽກຮ້ອງໃຫ້ຄົນເຈັບຈ່າຍໃຫ້ຄ່າບໍລິການດູແລສຸຂະພາບ, ຂະບວນການ ແລະ ການສະໜອງທີ່ຄາດຄະເນໄວ້ຢ່າງມີເຫດຜົນ ຊຶ່ງໂຮງໝໍຈະເປັນຜູ້ບໍລິການໃຫ້. ການປະເມີນ ແມ່ນອີງໃສ່ການສະເລ່ຍເວລາທີ່ທ່ານນອນພັກ ແລະ ບໍລິການ ສຳລັບການບົ່ງມະຕິພະຍາດຂອງຄົນເຈັບ. ພວກເຂົາບໍ່ສັນຍາວ່າຈະໃຫ້ບໍລິການດ້ວຍມູນຄ່າຕາຍຕົວ. ຄວາມຮັບຜິດຊອບດ້ານການເງິນຂອງຄົນເຈັບອາດຈະມີຫລາຍ ຫຼື ໜ້ອຍກ່ວາຈຳນວນທີ່ປະເມີນ ໂດຍອີງໃສ່ການບໍລິການທີ່ຄົນເຈັບໄດ້ຮັບຕົວຈິງ.

ໂຮງໝໍສາມາດສະໜອງມູນຄ່າປະເມີນທີ່<u>ເປັນການບໍລິການ</u>ຂອງໂຮງໝໍເທົ່ານັ້ນ. ອາດຈະມີການຄິດໄລ່ເງິນເພີ່ມເຕີມສຳລັບການບໍລິການທີ່ຈະມີໃຫ້ແພດໃນຊ່ວງເວລາທີ່ຄົນເຈັບນອນພັກຢູ່ໃນໂຮງໝໍ, ເຊັ່ນ: ໃບບິນຈາກແພດສ່ວນຕົວ, ແລະ ແພດຊ່ຽວຊານການວາງຢາສະລົບ ຫຼື ຢາມຶນ, ແພດຊ່ຽວຊານບົ່ງມະຕິພະຍາດ, ແພດສາຍຮັງສີ, ບໍລິສັດທີ່ຈັດບໍລິການລົດພະຍາບານສຸກເສີນ ຫຼື ຊ່ຽວຊານກ່ຽວກັບການດູແລສຸຂະພາບອື່ນໆ ຜູ້ທີ່ບໍ່ແມ່ນລູກຈ້າງຂອງໂຮງໝໍ. ຄົນເຈັບຈະໄດ້ຮັບໃບບິນຕ່າງຫາກສຳລັບການບໍລິການເຫລົ່ານີ້.

ຖ້າທ່ານມີຂໍ້ຂ້ອງໃຈກ່ຽວກັບການປະເມີນທີ່ຂຽນເປັນລາຍລັກອັກສອນ, ກະລຸນາຕິດຕໍ່ຫາ ພະແນກຕ້ອນຮັບຄົນເຈັບທີ່ 855-398-1637. ຖ້າທ່ານມີຂໍ້ຂ້ອງໃຈ ຫຼື ຖ້າທ່ານຕ້ອງການຈ່າຍທາງໂທລະສັບ, ກະລຸນາຕິດຕໍ່ຫາ ການບໍລິການດ້ານການເງິນຂອງຄົນເຈັບທີ່ 855-398-1633.

ເອກະສານ F

<u>ແຈ້ງການກ່ຽວກັບສິດທິ</u>

ຂອບໃຈທີ່ເລືອກ Sutter Health ສຳລັບການບໍລິການທີ່ຜ່ານມາຂອງທ່ານ. ຄັດຕິດມາພ້ອມນີ້ ກະລຸນາເບິ່ງແຈ້ງການກ່ຽວກັບການເກັບເງິນສຳລັບການເຂົ້າມາປິ່ນປົວໃນໂຮງໝໍຂອງທ່ານ. **ການຈ່າຍເງິນຈະຮອດກຳນົດໄວໆນີ້.**ທ່ານອາດຈະໄດ້ຮັບສິດສ່ວນຫລຸດ ຖ້າທ່ານເຮັດໄດ້ຕາມຄຸນສົມບັດດ້ານການເງິນບາງຢ່າງ, ປຶກສາຂ້າງລຸ່ມນີ້, ຫຼື ຖ້າວ່າທ່ານສົ່ງລາຍຈ່າຍທັນທີ.

ກະລຸນາຮັບຮູ້ວ່າ ນີ້ແມ່ນໃບບິນສຳລັບບໍລິການຂອງໂຮງໝໍເທົ່ານັ້ນ. ອາດຈະມີການເກັບເງິນເພີ່ມເຕີມສຳລັບຄ່າບໍລິການຈາກແພດໃນເວລາພັກຢູ່ໃນໂຮງໝໍ, ເຊັ່ນ: ໃບບິນຕ່າງໆຈາກແພດ, ແລະ ແພດຊຳນານການອາງຢາງສະລົບ ຫຼື ຢາມຶນ, ແພດຊ່ຽວຊານດ້ານການບົ່ງມະຕິພະຍາດ, ແພດສ່ອງຮັງສີ, ບໍລິການລົດພະຍາບານສຸກເສີນ ຫຼື ຊ່ຽວຊານທາງການແພດອື່ນໆ ທີ່ບໍ່ແມ່ນລູກຈ້າງຂອງໂຮງໝໍ. ທ່ານອາດຈະໄດ້ຮັບໃບບິນທີ່ແຍກຕ່າງຫາກສຳລັບການບໍລິການຂອງພວກເຂົາ.

<u>ສັງລວມສິດທິຂອງທ່ານ:</u> ກົດໝາຍຂອງຣັຖ ແລະ ຣັຖບານກາງ ຮຽກຮ້ອງໃຫ້ຜູ້ເກັບໜີ້ປິ່ນປົວທ່ານຢ່າງຍຸດຕິທຳ ແລະ ຫ້າມຜູ້ເກັບໜີ້ສິນບໍ່ໃຫ້ເຮັດແຈ້ງການທີ່ຜິດພາດ ຫຼື ມີການລະເມີດ, ໂດຍນຳໃຊ້ພາສາທີ່ບໍ່ສຸພາບ ຫຼື ຫຍາບຄາຍ ຫຼື ມີການສື່ສານທີ່ບໍ່ເໝາະສົມກັບບຸກຄົນທີສາມ ລວມທັງ ນາຍຈ້າງຂອງທ່ານ. ຍົກເວັ້ນພາຍໃຕ້ສະພາບການທີ່ບໍ່ປົກກະຕິ, ຜູ້ເກັບໜີ້ອາດຈະຕິດຕໍ່ຫາທ່ານກ່ອນເວລາ 8:00 ໂມງເຊົ້າ ຫຼື ຫຼັງຈາກ 9:00 ໂມງແລງ. ໂດຍທົ່ວໄປ, ຜູ້ເກັບໜີ້ອາດຈະບໍ່ໃຫ້ຂໍ້ມູນກ່ຽວກັບໜີ້ສິນຂອງທ່ານໃຫ້ກັບບຸກຄົນອື່ນ, ນອກຈາກ ທະນາຍ ຫລື ຄູ່ສົມຣົດຂອງທ່ານ. ຜູ້ເກັບໜີ້ອາດຈະຕິດຕໍ່ຫາບຸກຄົນອື່ນ ເພື່ອຢັ້ງຢືນສະຖານທີ່ຂອງທ່ານ ຫຼື ບັງຄັບໃຫ້ປະຕິບັດຕາມຄຳຕັດສິນ. ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບກົດຈະກຳເກັບໜີ້, ທ່ານອາດຈະຕິດຕໍ່ຫາ ຄະນະປະຕິບັດງານດ້ານການຄ້າຂອງຣັຖບານກາງ (Federal Trade Commission) ໂດຍໂທໄປທີ່ 1-877-FTC-HELP (382-4357) ຫຼື ສົ່ງທາງອອນລາຍທີ່ www.ftc.gov.

ບໍລິການໃຫ້ຄຳປຶກສາສິນເຊື່ອທີ່ບໍ່ມີກຳໄລ, ພ້ອມທັງ ການຊ່ວຍເຫລືອຂອງຜູ້ບໍລິໂພກຈາກຫ້ອງການບໍລິການດ້ານກົດໝາຍປະຈຳທ້ອງຖິ່ນ, ອາດຈະມີຢູ່ໃນເຂດຂອງທ່ານ. ກະລຸນາຕິດຕໍ່ຫາຫ້ອງການບໍລິການດ້ານການເງິນຂອງຄົນເຈັບທີ່ໝາຍເລກ 855-398-1633 ເພື່ອເປັນບ່ອນອີງ

Sutter Health ມີສັນຍາກັບຕົວແທນຜູ້ເກັບເງິນຈາກຂ້າງນອກ ເພື່ອເກັບເງິນຈາກຄົນເຈັບ. ຕົວແທນເກັບເງິນຖືກຮຽກຮ້ອງໃຫ້ປະຕິບັດຕາມນະໂຍບາຍຂອງໂຮງໝໍ. ຕົວແທນຜູ້ເກັບເງິນຍັງຖືກຮຽກຮ້ອງໃຫ້ຈື່ຈຳ ແລະ ຕິດແຜນຈ່າຍເງິນຕ່າງໆທີ່ໄດ້ເຫັນດີຈາກໂຮງໝໍ ແລະ ຄົນເຈັບ.

<u>ການຊ່ວຍເຫລືອດ້ານການເງິນ (ການເບິ່ງແຍງຈາກມູນນິທິ):</u> Sutter Health ມີພັນທະໃນການສະໜອງການຊ່ວຍເຫລືອດ້ານການເງິນ ໃຫ້ຄົນເຈັບທີ່ມີລາຍໄດ້ຕ່ຳທີ່ໄດ້ຮັບສິດ ຊຶ່ງເປັນຜູ້ທີ່ມີປະກັນໄພທີ່ຕ້ອງການໃຫ້ຄົນເຈັບຈ່າຍເງິນສ່ວນທີ່ສຳຄັນຂອງການດູແລຂອງພວກເຂົາ. ຕໍ່ໄປນີ້ແມ່ນສັງລວມເງື່ອນໄຂຂອງການໄດ້ຮັບສິດສຳລັບການຊ່ວຍເຫລືອດ້ານການເງິນ ແລະ **ຂັ້ນຕອນໃນ**ການສະໝັກສຳລັບຄົນເຈັບທີ່ຕ້ອງການຂໍການຊ່ວຍເຫລືອດ້ານການເງິນ. ປະເພດຂອງຄົນເຈັບຕໍ່ໄປນີ້ ແມ່ນມີສິດໄດ້ຮັບການຊ່ວຍເຫລືອດ້ານການເງິນ:

- ຄົນເຈັບທີ່ບໍ່ມີບຸກຄົນທີສາມຈ່າຍໃຫ້, ເຊັ່ນ: ບໍລິສັດປະກັນໄພ ຫຼື ໂປຣແກຣມຂອງຣັຖບານ, ສຳລັບເງິນໃນ ສ່ວນໃດໜຶ່ງຂອງລາຍຈ່າຍດູແລສຸຂະພາບຂອງພວກເຂົາ **<u>ແລະ</u>** ມີລາຍໄດ້ຂອງຄອບຄົວຢູ່ທີ່ ຫຼື ຕ່ຳກ່ວາລະດັບ ຄວາມທຸກຍາກຂອງຣັຖບານກາງ 400%.

- ຄົນເຈັບທີ່ໄດ້ຮັບການຄຸ້ມຄອງຈາກປະກັນໄພ ແຕ່ວ່າມີ (i) ລາຍໄດ້ຂອງຄອບຄົວຢູ່ທີ່ ຫຼື ຕ່ຳກ່ວາລະດັບຄວາມ ທຸກຍາກຂອງຣັຖບານກາງ 400%; **ແລະ** (ii) ລາຍຈ່າຍກ່ຽວກັບການດູແລສຸຂະພາບສຳລັບພວກເຂົາ ຫຼື ຄອບຄົວຂອງພວກເຂົາ (ທີ່ມີຢູ່ໃນໂຮງໝໍໃນເຄືອຂ່າຍ ຫຼື ໄດ້ຈ່າຍໃຫ້ກັບຜູ້ຈັດຫາອື່ນໆໃນ 12 ເດືອນທີ່ຜ່ານ ມາ) ທີ່ເກີນ 10% ຂອງລາຍໄດ້ຂອງຄອບຄົວຄົນເຈັບ.

- ບັນດາຄົນເຈັບທີ່ໄດ້ຮັບການຄຸ້ມຄອງຈາກປະກັນໄພ ແຕ່ວ່າໄດ້ໃຊ້ເງິນໝົດທັງກ່ອນ ຫຼື ໃນເວລາທີ່ພວກເຂົາພັກ ຢູ່ໃນໂຮງໝໍ ແລະ ມີລາຍໄດ້ຂອງຄອບຄົວຢູ່ທີ່ ຫຼື ຕ່ຳກ່ວາລະດັບຄວາມທຸກຍາກຂອງຣັຖບານກາງ 400%.

ທ່ານສາມາດສະໝັກຂໍການຊ່ວຍເຫລືອດ້ານການເງິນໂດຍການໃຊ້ໃບສະໝັກທີ່ສາມາດຫາໄດ້ຢູ່ ຫ້ອງການບໍລິການດ້ານ ການເງິນຂອງຄົນເຈັບ, ຊຶ່ງຕັ້ງຢູ່ພາຍໃນພະແນກຕ້ອນຮັບ/ລົງທະບຽນຄົນເຈັບຢູ່ໂຮງໝໍ ຫຼື ໂທຫາຫ້ອງການບໍລິການດ້ານ ການເງິນຂອງຄົນເຈັບທີ່ 855-398-1633, ຫຼື Sutter Health ຫຼື ເວັບໄຊທ໌ຂອງໂຮງໝໍ (www.sutterhealth.org). ທ່ານຍັງສາມາດສົ່ງໃບສະໝັກໂດຍການສົນທະນາກັບຕົວແທນຈາກຫ້ອງການບໍລິການດ້ານການເງິນຂອງຄົນເຈັບ ຊຶ່ງ ເປັນຜູ້ທີ່ຈະຊ່ວຍໃຫ້ທ່ານຂຽນໃບສະໝັກ. ໃນຂະບວນການສະໝັກ ທ່ານອາດຈະຕ້ອງສະໜອງຂໍ້ມູນກ່ຽວກັບຈຳນວນຄົນ ໃນຄອບຄົວຂອງທ່ານ, ລາຍໄດ້ປະຈຳເດືອນຂອງທ່ານແລະ ຂໍ້ມູນອື່ນທີ່ຈະຊ່ວຍໃຫ້ໂຮງໝໍ ກຳນົດສິດທິຂອງທ່ານສຳລັບ ການຊ່ວຍເຫລືອດ້ານການເງິນ. ທ່ານອາດຈະຕ້ອງສະໜອງຫົວຂໍ້ນໃບຮັບເງິນ ຫຼື ບັນທຶກການເສຍອາກອນ ເພື່ອຊ່ວຍ ໃຫ້ Sutter ພິສູດລາຍໄດ້ຂອງທ່ານ.

ຫລັງຈາກທ່ານສົ່ງໃບສະໝັກ, ໂຮງໝໍຈະທົບທວນຂໍ້ມູນ ແລະ ແຈ້ງໃຫ້ທ່ານຊາບເປັນລາຍລັກອັກສອນກ່ຽວກັບສິດຂອງ ທ່ານ. ຖ້າທ່ານມີຂໍ້ຂ້ອງໃຈໃນຂະບວນຂອງການສະໝັກ, ທ່ານອາດຈະຕິດຕໍ່ຫາບໍລິການດ້ານການເງິນຂອງຄົນເຈັບທີ່ (855) 398-1633.

ຖ້າທ່ານບໍ່ເຫັນດີກັບຄຳຕັດສິນຂອງໂຮງໝໍ, ທ່ານອາດຈະສົ່ງຂໍ້ຂັດຄ້ານໄປຫາ ຫ້ອງການບໍລິການດ້ານການເງິນຂອງຄົນ ເຈັບ.

ທ່ານສາມາດເອົາສຳເນົາຂອງນະໂຍບາຍຊ່ວຍເຫລືອດ້ານການເງິນຂອງໂຮງໝໍ, ບົດສັງລວມຫຍໍ້ ແລະ ໃບສະໝັກ ເປັນ ພາສາທີ່ເຂົ້າໃຈງ່າຍ,ພ້ອມທັງ ໃບສະໝັກຂໍໂປຣແກຣມຂອງຣັຖບານ ທີ່ມີຫຼາຍພາສາດ້ວຍຕົນເອງທີ່ຫ້ອງການລົງທະບຽນ ຄົນເຈັບ ຫຼື ຫ້ອງການບໍລິການດ້ານການເງິນຂອງຄົນເຈັບຂອງພວກເຮົາ ແລະ ຢູ່ທີ່ sutterhealth.org ແລະ ສາມາດ ສົ່ງທາງໄປສະນີ. ພວກເຮົາຍັງສາມາດສົ່ງສຳເນົານະໂຍບາຍການຊ່ວຍເຫລືອດ້ານການເງິນໃຫ້ທ່ານ ໂດຍບໍ່ເສຍຄ່າ ຖ້າ ທ່ານຕິດຕໍ່ຫາຫ້ອງການບໍລິການດ້ານການເງິນຂອງຄົນເຈັບຂອງພວກເຮົາທີ່ 855-398-1633.

ໂດຍອີງຕາມກົດໝາຍລາຍຮັບພາຍໃນ ພາກທີ 1. 501(r)-5, Sutter Health ເລືອກໃຊ້ວິທີການຂອງ Medicare ໃນການປະເມີນຈຳນວນເງິນທົ່ວໄປທີ່ອອກຢູ່ໃນໃບບິນ; ເຖິງຢ່າງໃດກໍ່ຕາມ, ຄົນເຈັບທີ່ໄດ້ຮັບສິດໃນການຊ່ວຍເຫລືອດ້ານ

ການເງິນ ຈະບໍ່ມີຄວາມຮັບຜິດຊອບຕໍ່ຈຳນວນເງິນທີ່ຫລາຍກ່ວາຈຳນວນເງິນທີ່ອອກຢູ່ໃນໃບບິນ ຍ້ອນວ່າຄົນເຈັບທີ່ໄດ້ຮັບສິດນັ້ນບໍ່ຈ່າຍເງິນຈຳນວນໃດໆ.

<u>ໃບສະໝັກທີ່ກຳລັງລໍຖ້າ</u>: ຖ້າສົ່ງໃບສະໝັກຂໍໂປຣແກຣມການຄຸ້ມຄອງສຸຂະພາບອື່ນໃນເວລາດຽວກັນທີ່ທ່ານສະໝັກຂໍການເບິ່ງແຍງຈາກມູນນິທິ, ໃບສະໝັກທັງສອງນັ້ນຈະບໍ່ຖືກກີດກັ້ນສຳລັບໂປຣແກຣມອື່ນ.

<u>ປະກັນສຸຂະພາບ/ການຄຸ້ມຄອງໂປຣແກຣມຂອງຣັຖບານ/ການຊ່ວຍເຫລືອດ້ານການເງິນ:</u> ຖ້າທ່ານມີການຄຸ້ມຄອງປະກັນສຸຂະພາບ, Medicare, Medi-Cal, ບໍລິການສຳລັບເດັກນ້ອຍຂອງຣັຖແຄລີຟໍເນັຍ, ຫຼື ແຫລ່ງຈ່າຍເງິນສຳລັບໃບບິນນີ້, ກະລຸນາຕິດຕໍ່ຫາບໍລິການດ້ານການເງິນຂອງຄົນເຈັບທີ່ 855-398-1633. ຖ້າເຫັນວ່າເໝາະສົມ, ຫ້ອງການການຊ່ວຍເຫລືອດ້ານການເງິນຂອງຄົນເຈັບ ຈະສົ່ງໃບບິນທີ່ມີຢູ່ເຫລົ່ານັ້ນສຳລັບການດູແລຂອງພວກເຂົາ.

ຖ້າທ່ານບໍ່ມີການປະກັນໄພ ຫຼື ການຄຸ້ມຄອງສຸຂະພາບ ໂດຍຜ່ານໂປຣແກຣມຂອງຣັຖບານ ເຊັ່ນ: Medi-Cal ຫຼື Medicare, ທ່ານອາດຈະມີສິດໄດ້ຮັບການຊ່ວຍເຫລືອໂປຣແກຣມຂອງຣັຖບານ. ຫ້ອງການບໍລິການດ້ານການເງິນຂອງຄົນເຈັບ ສາມາດເອົາໃບສະໝັກໃຫ້ທ່ານ ແລະ ຊ່ວຍທ່ານດຳເນີນຂະບວນການສະໝັກ.

ຖ້າທ່ານສາມາດໄດ້ຮັບການຊ່ວຍເຫລືອດ້ານການເງິນຈາກໂຮງໝໍທີ່ທ່ານເຊື່ອວ່າຄຸ້ມຄອງການບໍລິການທີ່ເປັນຫົວຂໍ້ຂອງໃບບິນນີ້, ກະລຸນາຕິດຕໍ່ຫາຫ້ອງການບໍລິການດ້ານການເງິນຂອງຄົນເຈັບທີ່ 855-398-1633.

<u>ການແລກປ່ຽນຜົນປະໂຫຍດດ້ານສຸຂະພາບຂອງຣັຖແຄລີຟໍເນັຍ:</u> ທ່ານອາດຈະມີສິດໄດ້ຮັບການຄຸ້ມຄອງດູແລສຸຂະພາບພາຍໃຕ້ແຄລີຟໍເນັຍທີ່ໄດ້ຮັບການຄຸ້ມຄອງ. ຕິດຕໍ່ຫາບໍລິການທຸລະກິດຂອງໂຮງໝໍສຳລັບຂໍ້ມູນເພີ່ມເຕີມ ແລະ ການຊ່ວຍເຫລືອ ເພື່ອເບິ່ງວ່າທ່ານມີຄຸນສົມບັດໄດ້ຮັບການຄຸ້ມຄອງດູແລສຸຂະພາບ ໂດຍຜ່ານການຄຸ້ມຄອງຂອງຣັຖແຄລີຟໍເນັຍ.

<u>ຂໍ້ມູນຕິດຕໍ່</u>: ການບໍລິການດ້ານການເງິນຂອງຄົນເຈັບສາມາດຕອບຄຳຖາມຂອງທ່ານ ກ່ຽວກັບໃບບິນຂອງໂຮງໝໍ ຫຼື ຕ້ອງການສະໝັກຂໍການຊ່ວຍເຫລືອດ້ານການເງິນ ຫຼື ໂປຣແກຣມຂອງຣັຖບານ. ເບີໂທລະສັບແມ່ນ 855-398-1633. ຊົ່ວໂມງເປີດບໍລິການທາງໂທລະສັບຂອງພວກເຮົາແມ່ນ 8:00 ໂມງເຊົ້າ ຫາ 5:00 ໂມງແລງ, ວັນຈັນ ຫາ ວັນສຸກ.

Exhibit G

Sutter Health Affiliate Hospitals, Physical Address and Website Address for Financial Assistance

Alta Bates Summit Medical Center

Patient Access/Registration

Ashby Campus
2450 Ashby Avenue
Berkeley, CA 94705
510-204-4444

Herrick Campus
2001 Dwight Way
Berkeley, CA 94704
510-204-4444

Summit Campus
350 Hawthorne Avenue
Oakland, CA 94609
510-655-4000

http://www.altabatessummit.org

California Pacific Medical Center

Patient Access/Registration

California Campus
3700 California Street
San Francisco, CA 94118
415-600-6000

Pacific Campus
2333 Buchanan Street
San Francisco, CA 94115
415-600-6000

Davies Campus
Castro and Duboce
San Francisco, CA 94114
415-600-6000

St. Luke's Campus
3555 Cesar Chavez St.
San Francisco, CA 94110
415-647-8600

http://www.cpmc.org

Eden Medical Center

Patient Access/Registration

Eden Campus
20103 Lake Chabot Road
Castro Valley, CA 94546
510-537-1234

http://www.edenmedicalcenter.org

Kahi Mohala, A Behavioral Healthcare System

Patient Access/Registration

91-2301 Fort Weaver Road
Ewa Beach, HI 96706
808-671-8511

http://www.kahimohala.org

Memorial Medical Center

Patient Access/Registration

1700 Coffee Road
Modesto, CA 95355
209-526-4500

http://www.memorialmedicalcenter.org

Memorial Hospital, Los Banos

Patient Access/Registration

520 I Street
Los Banos, CA 93635
209-826-0591

http://www.memoriallosbanos.org

Menlo Park Surgical Hospital

Patient Access/Registration

570 Willow Road
Menlo Park, CA 94025
650-324-8500

http://www.pamf.org/mpsh

Mills-Peninsula Health Services

Patient Access/Registration

1501 Trousdale Drive
Burlingame, CA 94010
(650) 696-5400

http://www.mills-peninsula.org

Novato Community Hospital

Patient Access/Registration

180 Rowland Way
Novato, CA 94945
415-897-3111

http://www.novatocommunity.org

Sutter Amador Hospital

Patient Access/Registration

200 Mission Blvd.
Jackson, CA 95642
209-223-7500

http://www.sutteramador.org

Sutter Auburn Faith Hospital

Patient Access/Registration

11815 Education Street
Auburn, CA 95602
530-888-4500

http://www.sutterauburnfaith.org

Sutter Coast Hospital

Patient Access/Registration

800 East Washington Blvd.
Crescent City, CA 95531
707-464-8511

http://www.suttercoast.org

Sutter Davis Hospital

Patient Access/Registration

2000 Sutter Place
(P.O. Box 1617)
Davis, CA 95617
530-756-6440

http://www.sutterdavis.org

Sutter Delta Medical Center

Patient Access/Registration

3901 Lone Tree Way
Antioch, CA 94509
925-779-7200

http://www.sutterdelta.org

Sutter Lakeside Hospital and Center for Health

Patient Access/Registration

5176 Hill Road East
Lakeport, CA 95453
707-262-5000

http://www.sutterlakeside.org

Sutter Maternity & Surgery Center of Santa Cruz

Patient Access/Registration

2900 Chanticleer Avenue
Santa Cruz, CA 95065-1816
831-477-2200

http://www.suttersantacruz.org

Sutter Medical Center, Sacramento

Patient Access/Registration

Sutter General Hospital
2801 L Street
Sacramento, CA 95816
916-454-2222

Sutter Memorial Hospital
5151 F Street
Sacramento, CA 95819
916-454-3333

Sutter Center for Psychiatry
7700 Folsom Blvd.
Sacramento, CA 95826
916-386-3000

http://www.suttermedicalcenter.org

Sutter Roseville Medical Center

Patient Access/Registration

One Medical Plaza
Roseville, CA 95661
916-781-1000

http://www.sutterroseville.org

Sutter Santa Rosa Regional Hospital

Patient Access/Registration

30 Mark West Springs Road
Santa Rosa, CA 95403
707-576-4000

http://www.suttersantarosa.org

Sutter Solano Medical Center

Patient Access/Registration

300 Hospital Drive
Vallejo, CA 94589
707-554-4444

http://www.suttersolano.org

Sutter Tracy Community Hospital

Patient Access/Registration

1420 N. Tracy Boulevard
Tracy, CA 95376-3497
209-835-1500

http://www.suttertracy.org